*ໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳແກ້ໄຂຄວາມທຸກຍາກ (ຊສທ) ຢູ່ ສປປ ລາວ*

*ບົດລາຍງານຫຍໍ້ ສະບັບທີ 07/2010:*

# *ການລົງທຶນ ແລະ ຄວາມຍືນຍົງຂອງຂະແໜງປ່າໄມ້*

*ບົດລາຍງານຫຍໍ້ະບັບນີ້ໄດ້ສ້າງຂຶ້ນໂດຍ ໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳຫຼຸດຜ່ອນຄວາມທຸກຍາກ (PEI) ຂອງ ສປປ ລາວ ເພື່ອແນ່ໃສ່ການລົບລ້າງຄວາມທຸກຍາກ ແລະ ບັນຫາສິ່ງແວດລ້ອມໃນ ການພັດທະນາ ແລະ ຂະບວນວາງແຜນແຫ່ງ ຊາດ. ຈຸດປະສົງ ຂອງບົດລາຍງານຫຍໍ້ສະບັບ ນີ້ ແມ່ນເພື່ອນຳ ເອົາຂໍ້ມູນຈາກຕົວຈິງ ແລະ ວິທີທາງເລືອກ ໃນຕົວຈິງ ເພື່ອການຊຸກຍູ້ການປ່ຽນແປງຂອງ ເສດຖະກິດລາວ ໄປໃນ ທິດທາງການພັດທະນາແບບຍືນຍົງສຳລັບຜູ້ທີ່ ທຸກຍາກທີ່ສຸດ.*

*ການຈັດພິມທີ່ຜ່ານມາ:*

*01/2010: ການຫຼຸດຜ່ອນຄວາມທຸກຍາກ ແລະ ການຄຸ້ມຄອງສິ່ງແວດລ້ອມ*

*02/2010: ຕົວຊີ້ວັດທາງດ້ານຄວາມທຸກຍາກ - ສິ່ງແວດລ້ອມ*

*03/2010: ການລົງທຶນ ແລະ ສົ່ງເສີມສິດທິບົດບາດທາງເສດຖະກິດຂອງແມ່ຍິງ*

*04/2010: ຜົນກະທົບທາງດ້ານເສດຖະກິດ-ສັງຄົມຂອງການລົງທຶນໃນການປູກໄມ້*

*05/2010: ການລົງທຶນທາງດ້ານເຊື້ອໄຟຊີວະພາບ*

*06/2010: ການລົງທຶນດ້ານພະລັງງານໄຟຟ້ານ້ຳຕົກ*

## *ສັງລວມຫຍໍ້*

ປ່າໄມ້ຂອງ ສປປ ລາວ ເປັນໜຶ່ງໃນຊັບພະຍາກອນທີ່ສຳຄັນທີ່ສຸດໃນປະເທດ. ປ່າໄມ້ພ້ອມກັບຊີວະນາໆພັນ ລວມທັງຫຼາຍຊະນິດພັນໄມ້ ທີ່ເກີດມີສະເພາະພື້ນທີ່ ແລະ ຫາຍາກ ເປັນສິ່ງທີ່ສະໜັບສະໜູນການດຳລົງຊີວິດຂອງປະຊາຊົນສ່ວນໃຫຍ່ໃນຊົນນະບົດ. ປ່າໄມ້ຍັງເປັນແຫຼ່ງລາຍຮັບຂອງລັດຖະບານ ຜ່ານການ ຂຸດຄົ້ນ, ປຸງແຕ່ງ ແລະ ການສົ່ງອອກ ແລະ ທີ່ດິນປ່າໄມ້ນັ້ນໄດ້ຖືກບຸເບີກ ເພື່ອນຳໃຊ້ເປັນດິນ ກະສິກຳ ແລະ ປູກໄມ້. ເມື່ອເບິ່ງໃນດ້ານຂອງການປ່ຽນແປງຂອງດິນຟ້າອາກາດ, ປ່າໄມ້ຂອງປະເທດກໍມີ ສ່ວນໃນການບັນເທົາ ແລະ ອາດສາມາດເປັນລາຍໄດ້ເສີມໃນການຊື້ຂາຍ ກາກບອນ ທີ່ສະສົມໄວ້ຢູ່ໃນປ່າໄມ້ ຖ້າຫາກມີການຄຸ້ມຄອງ ແລະ ການຮັກສາໄວ້ ຢ່າງຍືນຍົງ.

ຢ່າງໃດກໍຕາມ, ປ່າໄມ້ຂອງສປປ ລາວ ນີ້ ກໍກຳລັງຫຼຸດນ້ອຍຖອຍລົງ ແລະ ບໍ່ອາດສາມາດຄ້ຳຊູປະຊາຊົນ ໄດ້, ເສດຖະກິດ ແລະ ຊີວະນາໆພັນໃນອະນາຄົດໄດ້ ຖ້າປ່າໄມ້ເຫຼົ່ານັ້ນຍັງສືບຕໍ່ເສື່ອມໂຊມ ແລະ ຖືກຕັດ ແບ່ງເປັນສ່ວນ ເລັກສ່ວນນ້ອຍ. ເຖິງແມ່ນວ່າ ຍັງບໍ່ມີຄວາມເຫັນເປັນເອກະພາບລະຫວ່າງແຫຼ່ງຂໍ້ມູນຕ່າງໆ ກໍຕາມ, ໃນປີ 1992, ປ່າໄມ້ ໄດ້ກວມເອົາປະມານ 47% ຂອງພື້ນທີ່ທົ່ວປະເທດ. ໃນປະຈຸບັນ ການປົກຫຸ້ມ ຂອງປ່າໄມ້ ໄດ້ຫຼຸດລົງ ເຫຼືອຢູ່ປະມານ 40%.

ຈຸດປະສົງສຳຄັນສຸດຂອງຍຸດທະສາດປ່າໄມ້ ຂອງລັດຖະບານ ສປປ ລາວ ພາຍໃນປີ 2020 ແມ່ນການລົບລ້າງຄວາມທຸກຍາກ. ເປົ້າໝາຍສະເພາະຂອງຍຸດທະສາດນີ້ແມ່ນ ໄດ້ລວມເອົາການພັດທະນາ ຄຸນະພາບ ຂອງພື້ນທີ່ປ່າໄມ້ທີ່ມີຢູ່ ແລະການເພີ່ມການປົກຫຸ້ມພື້ນທີ່ປ່າໄມ້ ໃຫ້ໄດ້ 70% ພາຍໃນປີ 2020. ບົດລາຍ ງານຫຍໍ້ສະບັບນີ້ ຈະເປັນ ການເຈາະເລິກເບິ່ງວ່າ ສປປ ລາວ ຈະສາມາດນຳໃຊ້ໜຶ່ງໃນມໍລະດົກທີ່ສຳຄັນ ທີ່ສຸດຂອງຕົນໃຫ້ຄຸ້ມຄ່າທີ່ສຸດ, ໂດຍບັນລຸເປົ້າໝາຍໃນການເພີ່ມ ແລະ ພັດທະນາປ່າໄມ້ ໃນຂະນະທີ່ ຕ້ອງຕອບ ສະໜອງການລົງທຶນທີ່ເພີ່ມຂຶ້ນໃນຂະແໜງການນີ້. ການລົງທຶນໃນຂະແໜງການປ່າໄມ້ ໄດ້ກວມ ເອົາຫຼາຍກິດຈະກຳ ການຕັດໄມ້, ການປຸງແຕ່ງ ແລະ ການສົ່ງອອກ, ຕະຫຼອດເຖິງການປູກໄມ້ແບບອຸດສາຫະກຳ, ລວມທັງ ການປູກປ່າຜະລິດສຳລັບຜະລິດຕະພັນເຄື່ອງປ່າຂອງດົງ ສູ່ຕະຫຼາດໃໝ່ສຳລັບຄັງສະສົມກາກບອນ ແລະ ບໍລິການກ່ຽວກັບລະບົບນິເວດ.



*ພາບໂດຍ: IUCN Lao PDR*

## 1. ຂະແໜງປ່າໄມ້ຂອງ ສປປ ລາວ

ປ່າໄມ້ເປັນໜຶ່ງໃນຊັບພະຍາກອນທີ່ລ້ຳຄ່າຂອງ ສປປ ລາວ, ເຊິ່ງຍັງເປັນປະເທດໜຶ່ງທີ່ອຸດົມສົມບູນທາງດ້ານປ່າໄມ້ຖ້າທຽບກັບປະເທດອື່ນໃນພູມິພາກເອເຊຍ-ປາຊີຟິກ. ປ່າໄມ້ຂອງລາວ ຍັງມີບົດບາດອັນສຳຄັນໃນການພັດທະນາເສດຖະກິດ, ສະໜອງສະບຽງອາຫານ ແລະ ເປັນແຫຼ່ງລາຍຮັບໃຫ້ແກ່ຊາວລາວ ແລະ ຄ້ຳຊູຊີວິດການເປັນຢູ່ ແລະ ສະໜອງການບໍລິການທາງດ້ານສິ່ງແວດລ້ອມ.

ຊັບພະຍາກອນປ່າໄມ້ໃນທົ່ວປະເທດລວມມີ ປ່າດິບແລ້ງ, ປ່າຫ່າງພັດໃບເຂດຮ້ອນ ແລະ ປ່າພັດໃບເຂດສູງໃກ້ເຂດຮ້ອນ, ປ່າດົງດິບເຂດສູງເຂດຮ້ອນ, ເຂດປ່າໄມ້ຕົ້ນສົນບາງສ່ວນ ແລະ ປ່າຜາຫີນປູນ, ປ່າໂຄກແລ້ງ ແລະ ປ່າປະສົມພັດໃບ (ເບິ່ງຕາມກອບທີ 1 ເພື່ອລະອຽດເພີ່ມເຕີມ).

ລະບົບເຂດສະຫງວນແຫ່ງຊາດ (NPAs) ໃນ ສປປ ລາວ ມີ 21 ເຂດ ແລະ 2 ເຂດເຊື່ອມຕໍ່. ເນື້ອທີ່ທັງໝົດ ທີ່ນອນຢູ່ໃນເຂດ NPA ກວມເອົາເນື້ອທີ່ປະມານ 3.5 ລ້ານ ເຮັກຕາ, ເຊິ່ງເທົ່າກັບເກືອບປະມານ 15% ຂອງເນື້ອທີ່ທົ່ວປະເທດ. ພ້ອມກັນນີ້, ຍັງມີເຂດອະນຸລັກ ແລະ ປ່າສະຫງວນໃນຂັ້ນແຂວງ ແລະ ຂັ້ນເມືອງ ທົ່ວປະເທດ, ເຊິ່ງ ຖ້າລວມເຂົ້າກັບເຂດສະຫງວນແຫ່ງຊາດແມ່ນມີເນື້ອທີ່ ກວມຫລາຍກວ່າ 20% ຂອງເນື້ອທີ່ດິນທັງໝົດ[1].

ປ່າໄມ້ທຳມະຊາດ ແລະ ເນື້ອທີ່ດິນປ່າໄມ້ທັງໝົດໃນ ສປປ ລາວ ແມ່ນເປັນຊັບສົມບັດຂອງວົງຄະນະຍາດແຫ່ງຊາດ, ໂດຍມີລັດຖະບານເປັນຕົວແທນ ໃນການຄຸ້ມ ຄອງ ແລະ ຈັດແບ່ງ (ຕົວຢ່າງເຊັ່ນ ໃນການອະນຸມັດການສຳປະທານ)[2]. ສປປ ລາວ ມີກອບທາງກົດໝາຍ, ກົດລະບຽບ ແລະ ຍຸດທະສາດທີ່ຄົບຖ້ວນໃນການປົກປັກຮັກສາ, ຄຸ້ມຄອງ ແລະ ນຳໃຊ້ປ່າໄມ້. ອັນນີ້ລວມມີກົດໝາຍວ່າດ້ວຍປ່າໄມ້ (1996 ສະບັບປັບປຸງ 2007), ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (1999), ແລະ ດຳລັດຕ່າງໆ ເຊັ່ນ: ກ່ຽວກັບການຕັດໄມ້ ແລະອຸດສາຫະກຳປຸງແຕ່ງໄມ້. ໃນປີ 2005, ລັດຖະບານລາວໄດ້ຮ່າງ*ຍຸດທະສາດປ່າໄມ້ແຫ່ງຊາດເຖິງປີ 2020* ເພື່ອວິເຄາະສະພາບຂອງຂະແໜງປ່າໄມ້ ແລະ ໄດ້ຕັ້ງເປົ້າໝາຍ ແລະ ໃຫ້ຂໍ້ແນະນຳໃນການພັດທະນາຂະແໜງນີ້. ຍຸດທະສາດນີ້ (ທີ່ຮັບຮູ້ກັນທົ່ວໄປວ່າ FS2020),ໄດ້ກຳນົດປະເພດ ຂອງປ່າໄມ້ ໃນ ສປປ ລາວ, ໂດຍອີງໃສ່ຈຸດປະສົງ ແລະ ການນຳໃຊ້.

FS2020 ຍັງເນັ້ນໜັກໃສ່ເປົ້າໝາຍຫຼັກສຳລັບຂະແໜງປ່າໄມ້, ຊຶ່ງລວມມີແຕ່ບໍ່ໄດ້ຈຳກັດແຕ່ດັ່ງລຸ່ມນີ້:

- ການຍຸດຕິການຖາງປ່າເຮັດໄຮ່ເລື່ອນລອຍພາຍໃນປີ 2005 ແລະ ການລົບລ້າງພາຍໃນປີ 2010;
- ການປັບປຸງເນື້ອທີ່ ແລະ ຄຸນນະພາບຂອງປ່າໄມ້ປົກຫຸ້ມ, ດ້ວຍການຟື້ນຟູປ່າໃຫ້ໄດ້ເຖິງ 6 ລ້ານ ເຮັກຕາ, ແລະ ປູກຕົ້ນໄມ້ໃນເນື້ອທີ່ດິນ 500,000 ເຮັກຕາ, ໂດຍມີເປົ້າໝາຍຢາກໃຫ້ມີເນື້ອທີ່ປ່າໄມ້ໃຫ້ບັນລຸເນື້ອທີ່ໄມ້ປູກໄດ້ ເຖິງ 500,000 ເຮັກຕາພາຍໃນປີ 2020; ແລະ
- ການສະໜອງຜະລິດຕະພັນຈາກປ່າໄມ້ສຳລັບການຊົມໃຊ້ພາຍໃນ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນ.

> ***ກອບທີ 1. ສະຖິຕິພື້ນຖານ***
> **ເນື້ອທີ່ປ່າໄມ້ໃນປະຈຸບັນ:** ປະມານ 40%
> **ປະເພດຫຼັກຂອງປ່າໄມ້:**
> • ປ່າດົງດິບແລ້ງທາງພາກເໜືອ
> • ປ່າດົງດິບເຂດສູງໃນເຂດຮ້ອນລຽບຕາມສາຍພູຫຼວງ ແລະ ພູພຽງບໍລະເວນ
> • ປ່າໂຄກໄມ້ຍາງຕາມທົ່ງພຽງແມ່ນ້ຳຂອງ
> • ປ່າເຂດສູງພັດໃບເຂດຮ້ອນຢ່າງຢາຍທາງພາກເໜືອ
> • ປ່າໂຄກແຫ້ງໃນພາກໃຕ້
> • ປ່າປະສົມພັດໃບພາກໃຕ້
> • ປ່າຫີນປູນໃນເຂດສາຍພູຫລວງ
> • ປ່າໄມ້ສົນໃນເຂດສາຍພູຫລວງ
> • ປ່າເຂດສູງໃກ້ເຂດຮ້ອນຢູ່ທາງເໜືອ (*Source: Clarke 2008 in Tong 2009*)
> **ເປີເຊັນຂອງປະຊາຊົນທີ່ອາໄສຊັບພະຍາກອນທຳມະຊາດ:** ປະມານ 80%
> **ເຂດປ່າສະຫງວນ:** ປະມານ 20% (ລວມເຂດສະຫງວນຂັ້ນແຂວງ ແລະ ຂັ້ນເມືອງ)
> **ມູນຄ່າການສົ່ງອອກໄມ້ໃນສົກປີ 2007/2008:** ປະມານ US$1.3 ຕື້
> **ການລົງທຶນໂດຍກົງຈາກຕ່າງປະເທດໃນສວນປູກໄມ້ໃນປີ 2007:** ປະມານ US$665 ລ້ານ
> **ພືດປູກຫຼັກ:** ໄມ້ກະຖິນ, ໄມ້ວີກ, ໄມ້ສັກ, ຢາງພະລາ, ອ້ອຍ, ໝາກສາລີ

ເຖິງວ່າຈະມີກອບນິຕິກຳທີ່ຄົບຖ້ວນ ແລະ ເປົ້າໝາຍຕ່າງໆທີ່ກຳນົດຢູ່ໃນຍຸດທະສາດປ່າໄມ້ FS2020 ກໍ່ຕາມ, ການທຳລາຍປ່າໄມ້ ແລະ ການທຳໃຫ້ປ່າໄມ້ເສື່ອມໂຊມ ຍັງຄົງເປັນບັນຫາທ້າທາຍທີ່ສຳຄັນໃນ ສປປ ລາວ. ຕົວຊັກຈູງ ລວມມີ ການຫັນປ່າໄມ້ທຳມະຊາດເປັນສວນປູກໄມ້ແບບການຄ້າ ແລະ ການພັດທະນາພື້ນຖານໂຄງລ່າງ ພ້ອມກັບການຕັດໄມ້ເຖື່ອນແບບບໍ່ຍືນຍົງ. ເຖິງວ່າຕົວເລກຈາກແຫຼ່ງຂໍ້ມູນຕ່າງໆອາດບໍ່ຄືກັນ ແຕ່ໂດຍທົ່ວໄປ ເປັນທີ່ຍອມຮັບວ່າ ເນື້ອທີ່ປ່າໄມ້ໃນ ສປປ ລາວ ໄດ້ຫຼຸດລົງຈາກ 70% ຂອງເນື້ອທີ່ປະເທດໃຫ້ ເຫຼືອແຕ່ 40% ໃນປະຈຸບັນ[3]. ເນື່ອງຈາກ ຂໍ້ມູນທີ່ຂັດກັນ, ການນິຍາມທີ່ແຕກຕ່າງກັນ ແລະ ການປ່ຽນແປງພື້ນຖານໃນດ້ານຊັບພະຍາກອນ ໄດ້ສ້າງຄວາມຫຍຸ້ງຍາກໃນການກຳນົດພາບຕົວຈິງຂອງລະດັບປ່າໄມ້ ແລະ ສະພາບທາງສະຖິຕິກ່ຽວກັບປ່າໄມ້ທີ່ຊັດເຈນ ຕະລອດໄລຍະເວລາສາມທົດສະວັດທີ່ຜ່ານມາ[4].

---

[1] IUCN Lao PDR. 2010. "ປ່າໄມ້ ແລະ ເຂດສະຫງວນ: Background Issues Paper for CoP 10" [ຮ່າງ].

[2] ສຳນັກງານນາຍົກລັດຖະມົນຕີ. 2005. *ຍຸດທະສາດປ່າໄມ້ເຖິງປີ 2020ຂອງ ສປປ ລາວ.* ວຽງຈັນ, ສປປ ລາວ.

[3] ການສຶກສາປີ 2002, ເນື້ອທີ່ປ່າໄມ້ຢູ່ລາວກວມເອົາ 41.2% (ອີງໃສ່ປ່າໄມ້ທຳມະຊາດທີ່ມີຄວາມໜາແໜ້ນຢ່າງຕ່ຳ 20%), in Tong, Pei Sin. 2009. "Lao People's Democratic Republic Forestry Outlook Study". Working Paper Series, Asia-Pacific Forestry Sector Outlook Study II. FAO, Bangkok.

[4] Figures for graph from the Department of Forestry, cited in Phongoudome, Chanhsamone, et al. 2008. "ສະພາບປ່າໄມ້ໃນສປປ ລາວໃນປະຈຸບັນ, ໃນບົດສະເໜີປະຊຸມ *ກະກຽມການປຶກສາຫາລືກ່ຽວກັບບັນຫາປ່ຽນແປງຂອງດິນຟ້າອາກາດໃນປະເທດ ລຸ່ມແມ່ນ້ຳຂອງ ແລະ ປະຊຸມປຶກສາຫາລືເພື່ອກະກຽມ REDD*, ຮ່າໂນຍ, 3-5 ພະຈິກ 2008. Phongoudome *et al* ຊີ້ໃຫ້ເຫັນວ່າ

Fig. 1. ພື້ນທີ່ປ່າໄມ້ໃນ ສປປ ລາວ (‘000ຮຕ ແລະ % ຂອງ ພື້ນທີ່ດິນທັງໝົດ) 1982-2007




ພາບສະແດງທີ 1 (ຂ້າງເທິງ) ສະແດງໃຫ້ເຫັນເນື້ອທີ່ປ່າໄມ້ໃນໄລຍະເວລາສອງທົດສະວັດທີ່ຜ່ານມາ ໂດຍມີການຄາດຄະເນວ່າມີການເພີ່ມຂຶ້ນໃນປີ 2007. ຕາມຂໍ້ມູນຂອງໂຕ້ງ (Tong)[5], ໂດຍສະເລ່ຍແລ້ວ ປະມານ 91,200 ເຮັກຕາ ຂອງປ່າໄມ້ ແມ່ນຖືກທຳລາຍພາຍໃນໄລຍະເວລາສອງທົດສະວັດທີ່ຜ່ານມາ. ບາງແຫຼ່ງຂໍ້ມູນກໍ່ປະເມີນການ ທຳລາຍປ່າໃນອັດຕາສະເລ່ຍປະມານ 53,000 ເຮັກຕາຕໍ່ປີ[6]. ຄຸນນະພາບຂອງປ່າກໍ່ແມ່ນຫຼຸດລົງ, ໂດຍມີການຫຼຸດລົງຂອງປ່າດົບໜ້າແໜ້ນຈາກ 29% ໃນປີ 1992 ເຫຼືອ 8.2% ໃນປີ 2005. ໃນໄລຍະດຽວກັນ, ປ່າໂລ່ງໄດ້ຂະຫຍາຍຂຶ້ນຈາກ 16% ຫາ 24.5%[7]. ນອກເໜືອຈາກບັນຫາດ້ານສິ່ງແວດລ້ອມແລ້ວ, ການທຳລາຍປ່າ ແລະ ການເຊື່ອມເສຍຂອງປ່າແມ່ນສ້າງບັນຫາໃຫ້ແກ່ສັງຄົມລາວ ໂດຍສະເພາະ ກໍ່ແມ່ນຜູ້ທີ່ຍັງທຸກຍາກທີ່ສຸດ ໂດຍສະເພາະແມ່ນແມ່ຍິງ ແລະ ບັນດາເຜົ່າຕ່າງໆ ທີ່ຍັງອາໄສປ່າໄມ້ໃນການລ້ຽງຊີບ[8], ເຊິ່ງຖືວ່າເປັນບັນຫາຫຼັກສຳລັບຄວາມຍືນຍົງຂອງອຸດສາຫະກຳທີ່ສຳຄັນຂອງລາວ.

## 2. ຄູນຄ່າຂອງປ່າໄມ້ລາວ

ຍຸດທະສາດປ່າໄມ້ FS2020 ໄດ້ລະບຸວ່າປ່າໄມ້ຂອງປະເທດໄດ້ຕອບສະໜອງຄຸນປະໂຫຍດຫຼາຍຢ່າງ ນັບຕັ້ງແຕ່ດ້ານເສດຖະກິດຈົນເຖິງດ້ານໂພຊະນາການ ແລະ ສິ່ງແວດລ້ອມ ດັ່ງອະທິບາຍຂ້າງລຸ່ມນີ້.

ຂະແໜງປ່າໄມ້ລາວມີບົດບາດອັນສຳຄັນໃນເສດຖະກິດ, ຜ່ານຜະລິດຕະພັນໄມ້, ແຮງງານ, ການລົງທຶນໃນການປູກຝັງ, ການສະໜອງພະລັງງານ ແລະ ການເອື້ອອຳນວຍທາງແຫຼ່ງອາຫານ ແລະ ຢາປົວພະຍາດແກ່ຊາວຊົນນະບົດ. ໃນຊຸມປີ 1990, ຂະແໜງປ່າໄມ້ມີການຂະຫຍາຍຕົວທີ່ສູງກວ່າຂະແໜງອື່ນໃນເສດຖະກິດລາວ, ກວມ 40% ຂອງການສົ່ງອອກ[9], ອັນນີ້ໄດ້ສະທ້ອນອອກໃນການຕັດໄມ້ທີ່ເພີ່ມຂຶ້ນ. ໃນປີ 2001, ປ່າໄມ້ໄດ້ປະກອບສ່ວນ ເຖິງ 3.2% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ຂອງ ສປປ ລາວ, ຜ່ານການຕັດໄມ້, ການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ[10]. ໃນປີ 2010, ຄາດຄະເນວ່າຂະແໜງກະສິກຳ ແລະ ປ່າໄມ້ຈະກວມ 0.9% ຂອງການຂະຫຍາຍຕົວຂອງການລວມຍອດຜະລິດຕະພັນພາຍໃນ[11].

ຄູນຄ່າສິນຄ້າໄມ້ທີ່ໄດ້ສົ່ງອອກກໍໄດ້ຫຼຸດລົງຢູ່ໃນໂຄງປະກອບເສດຖະກິດຂອງຊາດ ແຕ່ກໍຍັງມີການສົ່ງອອກ 4.5% ຂອງການສົ່ງອອກທັງໝົດໃນສົກປີ 2007/2008[12] (ຕະຕະລາງທີ 1, ໜ້າຕໍ່ໄປ, ໃຫ້ຂໍ້ມູນກ່ຽວກັບການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຂອງ ສປປ ລາວ). ຕົວເລກທາງການໃນການຕັດໄມ້ຫຼຸດລົງຈາກ 260,000ມ³ ໃນສົກປີ 2000/2001 ແລະ 2001/2002 ເຫຼືອ 150,000ມ³ ໃນສົກປີ 2004/2005[13]. ຂໍ້ມູນຂອງກະຊວງອຸດສາຫະກຳ ແລະ ການຄ້າ (MOIC) ກ່ຽວກັບການສະໜອງໄມ້ທ່ອນໄດ້ແຈ້ງໃຫ້ຮູ້ວ່າມີ ໂກຕາ 300,000ມ³ ຕໍ່ປີ ໃນຊ່ວງເວລາສາມທົດສະວັດທີ່ຜ່ານມາ ໂດຍປະມານ ສອງສ່ວນສາມ ທີ່ມາຈາກການບຸກເບີກທີ່ດິນເພື່ອໂຄງການກໍ່ສ້າງພື້ນຖານໂຄງລ່າງ ແລະ ສ່ວນທີ່ເຫຼືອແມ່ນມາຈາກປ່າທຳມະຊາດ ແລະ ສ່ວນໜ້ອຍໜຶ່ງແມ່ນມາຈາກປ່າປູກ[14].

ມີຂໍ້ມູນຂັດແຍ້ງລະຫວ່າງສະຖິຕິການສົ່ງອອກຂອງ ລາວ ໃນຫຼາຍລະດັບ ແລະ ຫຼາຍສະຖາບັນ ແລະເມື່ອທຽບໃສ່ສະຖິຕິການນຳເຂົ້າຈາກຄູ່ຮ່ວມມືທຸລະກິດ. ອີງໃສ່ MOIC, ຈຳນວນການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ທັງໝົດຈາກ ສປປ ລາວ ໃນສົກປີ 2007/2008 ແມ່ນປະມານ US$1.3 ຕື້ (ຕາຕະລາງ ທີ 1 ເພື່ອຂໍ້ມູນເພີ່ມເຕີມ). ນີ້ເປັນຕົວເລກທີ່ສູງກວ່າຂໍ້ມູນຈາກ MOIC ໃນການສົ່ງອອກໄມ້ໃນປີກ່ອນໜ້າ ສົກປີ 2006/2007 ຢູ່ປະມານ of US$ 72.53 ລ້ານ, ເຊິ່ງຕ່າງຈາກຂໍ້ມູນຂອງກົມພາສີທີ່ມີ US$ 45.86 ລ້ານ ຂອງການສົ່ງອອກ[15]. ເພື່ອໃຫ້ສອດຄ່ອງກັບນະໂຍບາຍ ແລະ ທິດທາງຂອງລັດຖະບານລາວ, ມີການເພີ່ມຈຳນວນການເຮັດເຟີນີເຈີ ແລະ ສິນຄ້າອື່ນໆ ທີ່ເປັນຜະລິດຕະພັນສຳເລັດຮູບຂຶ້ນ ແລະ ຫຼຸດການຜະລິດໄມ້ແປຮູບລົງ.

ຄວາມຕ້ອງການຂອງຜະລິດຕະພັນໄມ້ ໃນບັນດາປະເທດລຸ່ມແມ່ນ້ຳຂອງ ແລະ ພາກອາຊີ-ປາຊີຟິກ ໂດຍລວມແມ່ນຍັງມີສູງ ສ່ວນຈຸດໝາຍປາຍທາງຂອງການສົ່ງອອກຜະລິດຕະພັນໄມ້ຂອງລາວ (ນອກຈາກຕະຫຼາດພາຍໃນ) ແມ່ນ ປະເທດໄທ, ຫວຽດນາມ ແລະ ຈີນ ແລະ ອີກຈຳນວນໜຶ່ງກໍ່ແມ່ນປະເທດເອີຣົບ. ການສົ່ງອອກໄປປະເທດຈີນແມ່ນເພີ່ມຂຶ້ນຫຼາຍ, ເຊິ່ງການສົ່ງອອກທັງໝົດໄດ້ກະໂດດຈາກ 14 ລ້ານ ຫາ 45 ລ້ານແມັດກ້ອນ ພາຍໃນ 10 ປີ[16]. ການປູກໄມ້ວິກ ແລະ ໄມ້ກະຖິນ ເພື່ອສະກັດເນື້ອໄມ້ຜະລິດ ແລະ ປຸງແຕ່ງເຈ້ຍໃນບັນດາປະເທດໃນຂົງເຂດ (ແລະໃນຂັ້ນຕໍ່ໄປກໍພາຍໃນ ສປປ ລາວ ເອງ) ກໍເປັນອີກຂະແໜງໜຶ່ງທີ່ມີການຂະຫຍາຍຕົວ. ຂະແໜງປ່າໄມ້ຂອງລາວເປັນຂະແໜງທີ່ສ້າງວຽກ

---

ຕົວເລກສະຖິຕິປີ 2007 ການຂະຫຍາຍເນື້ອທີ່ປ່າໄມ້, ລວມມີ 14.9 ລ້ານ ha, ລວມມີປ່າອະນຸລັກ, ປ່າປ້ອງກັນ, ແລະ ປ່າຜະລິດ ດັ່ງຊຽນໄວ້ໃນ DoF 2007 ແລະ ໃນກົດໝາຍວ່າດ້ວຍປ່າໄມ້ 2007. ການເພີ້ມຂຶ້ນຂອງປ່າປົກຫຸ້ມຕາມຂໍ້ມູນປີ 2007 ອາດຄົງຈະເປັນເພາະການລວມເອົາປ່າໄມ້ທີ່ມີຈອມໜ້ອຍກວ່າ 20% ເຂົ້ານຳ.

[5] Tong, 2009.

[6] World Bank. 2007. *ການຕິດຕາມສິ່ງແວດລ້ອມ.* ວຽງຈັນ,ສປປ ລາວ.

[7] FS2020.

[8] FS2020.

[9] CPI, NSC and UNDP, 2006, in Tong 2009.

[10] ປື້ມສະຖິຕິປີ 2003 ແລະ ສະຖິຕິເສດຖະກິດ ແລະ ເງິນຕາ, ກັນຍາ 2002, ທະນາຄານກາງແຫ່ງ ສປປ ລາວ, ອ້າງອີງໃນ FS2020.

[11] The World Bank. 2010. *ການຕິດຕາມສິ່ງແວດລ້ອມ. ໃນ ສປປ ລາວ: ລາຍງານກາງປີ, ພຶດສະພາ 2010.*

[12] ຂໍ້ມູນຈາກ MOIC ປີ 2007, ກ່າວໃນໂຄງການ MAF ແລະ SUFORD ໂຄງການ 2009.”ໂອກາດໃນການປັບປຸງອຸດສາຫະກຳປຸງແຕ່ງໄມ້ໃນສປປ ລາວ”.

[13] FS2020.

[14] MAF & SUFORD, 2009.

[15] MAF & SUFORD, 2009. ນອກຈາກຄວາມບໍ່ເປັນເອກະພາບຂອງຂໍ້ມູນແລ້ວ, ການເພີ່ມຂຶ້ນຂອງການສົ່ງໄມ້ອອກອາດຈະເປັນໄປໄດ້ມາຈາກປັດໃຈອື່ນ ເຊັ່ນ: ການເພີ່ມໄມ້ທ່ອນທີ່ໄດ້ຈາກໂຄງການພັດທະນາພື້ນຖານໂຄງລ່າງຕ່າງໆ.

[16] White et al, 2006, cited in Tong 2009.

| ຜະລິດຕະພັນ | ອາຊຽນ | | ເອເຊຍ ອາເມລິກາ | | ເອີຣົບ | | ລວມ | |
|---|---|---|---|---|---|---|---|---|
| | $m^3$ | $ US'000 | $m^3$ | $ US'000 | $m^3$ | $ US'000 | $m^3$ | $ US'000 |
| ຜະລິດຕະພັນສຳເລັດຮູບ | 190,020 | 35,345 | 10,840 | 3,420 | 46 | 573 | 200,906 | **39,428** |
| ຜະລິດຕະພັນເຄິ່ງສຳເລັດຮູບ | 31,487 | 7,487 | 95 | 43 | 32 | 26 | 31,614 | **7,557** |
| ຜະລິດຕະພັນໄມ້ | 46,579 | 6,753 | 2,359 | 208 | - | - | 48,938 | **6,962** |
| ເຟີນີເຈີໄມ້ | Unknown no. sets | 2,966 | Unknown no. sets | 2,506 | - | - | Unknown no. sets | **5,473** |
| ລວມ | 268,086 | 52,552 | 13,294 | 6,180 | 78 | 599 | 281,458 | **59,422** |
| ມູນຄ່າການສົ່ງອອກທັງໝົດຂອງປະເທດ | | | | | | | **1,307,459** | |
| ມູນຄ່າການນຳເຂົ້າທັງໝົດຂອງປະເທດ (ລວມການລົງທຶນ ແລະ ການຊ່ວຍເຫຼືອ) | | | | | | | **1,364,824** | |
| ເງິນຄົງເຫຼືອ | | | | | | | **- 57,365** | |
| ອັດຕາມູນຄ່າການສົ່ງອອກໄມ້ຂອງປະເທດ | | | | | | | **4.5 %** | |

**Table 1.** ການສົ່ງອອກຜະລິດຕະພັນໄມ້ໃນ ສປປ ລາວ **2007/2008**[1]

ເຮັດວຽກທຳທີ່ສຳຄັນ. ເຖິງວ່າບໍ່ມີຂໍ້ມູນທີ່ແນ່ນອນ ແຕ່ຍຸດທະສາດປ່າໄມ້ FS2020 ກ່າວວ່າ ຂະແໜງນີ້ສ້າງ ວຽກເຮັດງານທຳໃນການ ຂຸດຄົ້ນໄມ້, ການຂົນສົ່ງ ແລະ ປຸງແຕ່ງເປັນຫລາຍພັນຕຳແໜ່ງ. ປະຊາຊົນໃນເຂດ

ຊົນນະບົດເປັນຜູ້ໄດ້ຮັບຜົນປະໂຫຍດສ່ວນຫລາຍ ຈາກການມີວຽກເຮັດງານທຳໃນດ້ານນີ້. ໄດ້ມີການປະເມີນວ່າ ອຸດສາຫະກຳປຸງແຕ່ງໄມ້ ໃຊ້ແຮງງານ ຫຼາຍກວ່າ 22,000 ຄົນ (ເຊິ່ງນັບໄດ້ວ່າເປັນໜຶ່ງສ່ວນສີ່ຂອງວຽກທັງໝົດ 93,400 ຕຳແໜ່ງ ທີ່ມີໃນຂະແໜງການອຸດສາຫະກຳ)[17].

ປ່າໄມ້ເປັນທີ່ເພິ່ງສຳລັບຊາວຊົນນະບົດໃນການສະໜອງເຄື່ອງປ່າຂອງດົງ ແລະ ຜະລິດຕະພັນໄມ້ຕ່າງໆ ເພື່ອບໍລິໂພກເອງ ຫຼື ຂາຍຢູ່ຕະຫຼາດ. ປະມານ 80% ຂອງປະຊາຊົນລາວແມ່ນອາໄສຊັບພະຍາກອນທຳມະຊາດ, ລວມມີປ່າໄມ້, ຜະລິດຕະພັນໄມ້, ອາຫານ, ພະລັງງານ, ເສັ້ນໃຍພືດ, ຢາປົວພະຍາດ ແລະຄວາມເຊື່ອຖື[18]. ໃນເຂດຊົນນະບົດ, ປ່າໄມ້ສືບຕໍ່ສະໜອງອາຫານ ແລະ ລາຍໄດ້ເພີ່ມ ເວລາກິດຈະກຳອື່ນບໍ່ສາມາດສ້າງລາຍໄດ້. ໂດຍສະເລ່ຍແລ້ວ, ຄອບຄົວໜຶ່ງບໍລິໂພກເຄື່ອງປ່າຂອງດົງ (NTFPs) ປະມານ US$280 ຕໍ່ປີ, ເຊິ່ງຖືວ່າສຳຄັນ ເມື່ອເຫັນວ່າ GDP ຂອງ ສປປ ລາວ ແມ່ນ US$880 ຕໍ່ຫົວຄົນໃນປີ 2009[19] (ແລະລາຍໄດ້ສະເລ່ຍໃນເຂດຊົນນະບົດອາດຈະຕໍ່າກວ່າຢູ່ໃນເມືອງໃຫຍ່). ຟືນ ແລະ ຖ່ານ ກໍ່ຍັງເປັນແຫຼ່ງພະລັງງານ ທີ່ຖືກນຳໃຊ້ຫຼາຍກວ່າໝູ່ໃນ ສປປ ລາວ, ບໍ່ວ່າຈະຢູ່ໃນເມືອງ ຫຼື ໃນເຂດຊົນນະບົດກໍ່ຕາມ.

ປ່າໄມ້ ກໍຍັງເປັນແຫຼ່ງພັດທະນາຂະແໜງອື່ນ ເຊັ່ນ: ສ້າງພະລັງງານໄຟຟ້ານ້ຳຕົກ, ການເດີນເຮືອ, ຊົນລະປະທານ, ກະສິກຳ ແລະ ການປະມົງ ໂດຍຈາກການຮັກສາດິນ, ຄວບຄຸມນ້ຳ ແລະ ປ້ອງກັນປະຊາຊົນຈາກໄພທຳມະຊາດ. ຖ້າຄິດເປັນເງິນຕາ, ການປະເມີນມູນຄ່າຂອງການບໍລິການຂອງລະບົບນິເວດທີ່ຖືກປົກປັກຮັກສາຜ່ານລະບົບເຂດປ່າສະຫງວນທີ່ມີປະສິດທິພາບແມ່ນມີ USD 38,000 ຕື້ ຕໍ່ປີ[20]. ຍົກຕົວຢ່າງ, ເຂດອ່າງໂຕ່ງນ້ຳຂອງເຂດສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ໄດ້ຊ່ວຍຮັກສານ້ຳໃຫ້ແກ່ໂຄງການເຂື່ອນນ້ຳເທີນ 2.

ຍິ່ງໄປກວ່ານັ້ນ, ປ່າໄມ້ຍັງມີ ແລະ ໃຫ້ການປົກປັກຮັກສາຊີວະນາໆພັນທີ່ສຳຄັນຂອງຊາດ, ຂອງພູມິພາກ ແລະ ຂອງທົ່ວໂລກ. ຕົວຢ່າງແມ່ນເຂດສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ທີ່ໄດ້ກ່າວມາຂ້າງເທິງນີ້ ແມ່ນມີຊີວະນາໆພັນທີ່ອຸດົມສົມບູນ ທາງດ້ານມະນຸດ, ສັດ ແລະ ພືດ. ອີງໃສ່ການຄົ້ນຄວ້າວິໃຈໃນຊຸມປີ 1990's, ເຂດດັ່ງກ່າວແມ່ນມີຢ່າງນ້ອຍນົກ 430 ຊະນິດພັນ, ເຊິ່ງເທົ່າກັບ 1/25 ຂອງພັນນົກທີ່ມີທັງໝົດໃນໂລກ. ຊົນເຜົ່າທີ່ເພິ່ງພາອາໄສໃນເຂດນີ້ກໍ່ຍັງໃຊ້ພາສາ 28 ພາສາ, ເຊິ່ງເທົ່າກັບ 12% ຂອງກຸ່ມພາສາທີ່ຊົນໃຊ້ໃນທົ່ວ ສປປ ລາວ.[21]

ຄູນຄ່າຂອງປ່າໄມ້ໃນ ສປປ ລາວ ກໍ່ຍັງສາມາດຄິດໄລ່ຕາມການປະກອບສ່ວນເຂົ້າໃນຂະແໜງຕ່າງໆຂອງເສດຖະກິດ ຕົວຢ່າງເຊັ່ນ: ການທ່ອງທ່ຽວ. ໃນປີ 2006, ຂະແໜງທ່ອງທ່ຽວໄດ້ສ້າງລາຍໄດ້ຫຼາຍກວ່າ US$170 ລ້ານໃຫ້ແກ່ປະເທດ, ເຊິ່ງໃນນັ້ນ ການທ່ອງທ່ຽວແບບອະນຸລັກມີການຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ອີງໃສ່ອົງການທ່ອງທ່ຽວແຫ່ງຊາດ (LNTA), ກາຍເຄິ່ງຂອງນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ແມ່ນມີຄວາມສົນໃຈດ້ານທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາຍໃນປີ 2013, ສປປ ລາວ ຄາດຄະເນວ່າຈະໄດ້ຮັບນັກທ່ອງທ່ຽວປະມານ 3 ລ້ານຄົນ, ສາມາດສ້າງລາຍໄດ້ US$500 ລ້ານ ທຸກປີ[22].

[17] FS2020

[18] FS2020.

[19] IUCN ສປປລາວ. 2010. "Biodiversity and Livelihoods: Background issues paper for CoP 10" [Draft]. Figure for current Gross national Income (GNI) per capita is from the World Bank, http://data.worldbank.org/indicator/NY.GNP.PCAP.CD.

[20] Quintela, *et al*, 2004, cited in Latsamay Sylavong, IUCN Lao PDR. 2009. "Public Investment in the Environment". Presentation to PEI National Workshop, Vientiane, 5-6 March 2009.

[21] Sylavong, 2009.

[22] LNTA 2004, 2006, cited in Tong 2009.

## 3. ການລົງທຶນໃນຂະແໜງປ່າໄມ້

ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ທີ່ໄຫຼ ເຂົ້າມາໃນ ສປປ ລາວ ແມ່ນລົງໃສ່ໃນຂະແໜງຊັບພະຍາກອນທຳມະຊາດເປັນຫຼັກ, ເຊິ່ງກວມເອົາ ປະມານ 80% ຂອງການລົງທຶນໂດຍກົງຈາກຕ່າງປະເທດທັງໝົດໃນປີ 2008[23]. ໃນຂະແໜງກະສິກຳ ແລະ ປ່າໄມ້, ການປູກຕົ້ນໄມ້ ແລະ ການປຸງແຕ່ງໄມ້ ແມ່ນກິດຈະກຳທີ່ຫຼາຍທີ່ສຸດ ຂອງການລົງທຶນໂດຍກົງຈາກຕ່າງປະເທດ[24].

ລັດຖະບານລາວ ກໍໄດ້ສົ່ງເສີມການລົງທຶນໃນຂະແໜງປູກໄມ້ ໂດຍສະເພາະ, ໃຫ້ເປັນວິທີຫຼຸດຜ່ອນຄວາມກົດດັນທີ່ມີຕໍ່ປ່າທຳມະຊາດ, ທົດແທນການຖາງປ່າເຮັດໄຮ່ ແລະ ໃຫ້ແຫຼ່ງລາຍໄດ້ໃໝ່ໆ ແກ່ກະສິກອນໃນຊົນນະບົດ. ຕົວເລກສະສົມຂອງການລົງທຶນໂດຍກົງຈາກຕ່າງປະເທດໃນຂະແໜງປູກໄມ້ຂອງ ລາວ ໄດ້ເພີ່ມຂຶ້ນພໍສົມຄວນໃນປີທີ່ຜ່ານມາ, ຈາກ 18.6 ລ້ານໂດລາ ໃນປີ 2001 ເຖິງເກືອບ 665 ລ້ານໂດລາ ໃນປີ 2007, ເຊິ່ງເທົ່າກັບ 11% ຂອງການລົງທຶນໂດຍກົງຈາກຕ່າງປະເທດທັງໝົດໃນເວລານັ້ນ[25]. ການລົງທຶນທີ່ເພີ່ມຂຶ້ນໃນອຸດສາຫະກຳໄມ້ ແລະ ຜະລິດຕະພັນໄມ້ ແລະ ການເຂົ້າສູ່ຕະຫຼາດພູມິພາກ ແລະ ສາກົນທີ່ດີກວ່າເກົ່າ ຖືວ່າເປັນວິທີໜຶ່ງເພື່ອເພີ່ມຄວາມສາມາດທາງດ້ານເຕັກນິກ ແລະ ການຄຸ້ມຄອງໃນ ສປປ ລາວ ຜ່ານການເຜີຍແຜ່ຄວາມຮູ້ ແລະ ເຕັກໂນໂລຊີ.

ການລົງທຶນໃນຜະລິດຕະພັນປ່າໄມ້ທີ່ຍືນຍົງ ຍັງອາສາມາດເປັນຂົງເຂດສຳຄັນໃນອະນາຄົດ, ເຊັ່ນ ໄມ້ທີ່ໄດ້ຜ່ານການຢັ້ງຢືນວ່າມີຄວາມຍືນຍົງ, ຜະລິດຕະພັນກະສິກຳປ່າໄມ້ ແລະ ຜະລິດຕະພັນທີ່ເນັດຈາກເຄື່ອງປ່າຂອງດົງ. ຕົວຢ່າງ, ໃນປະຈຸບັນ ໄດ້ລວມເອົາການສົ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຮັບຮອງປ່າໄມ້ໃນພື້ນທີ່ປ່າຜະລິດ (PFAs) ຜ່ານໂຄງການປ່າໄມ້ຍືນຍົງ ເພື່ອການພັດທະນາຊົນນະບົດ (SUFORD), ແລະ ການປູກ ແລະ ຈຳໜ່າຍຫວາຍ ທີ່ໄດ້ມີການຮອງຮັບຈາກໂຄງການສົ່ງເສີມຫວາຍແບບຍືນຍົງຂອງອົງການ WWF[26]. ຜະລິດຕະພັນຈາກເຄື່ອງປ່າຂອງດົງ ທີ່ມີຄວາມຕ້ອງການຫຼາຍໃນພາກພື້ນ ແລະ ໃນທ້ອງຖິ່ນ, ເຊັ່ນ ໝາກແໜ່ງ ແລະ ໝາກຈອງ, ກໍສະແດງໃຫ້ເຫັນຄວາມໜ້າສົນໃຈໃນແບບແຜນ ການເພີ່ມລາຍຮັບໃນທ້ອງຖິ່ນ ແລະ ພັດທະນາຄວາມຍືນຍົງຂອງເຄື່ອງປ່າຂອງດົງ (ເບິ່ງກອບທີ 2).

## 4. ສິ່ງທ້າທາຍສຳລັບຂະແໜງປ່າໄມ້ຂອງລາວ

ເຖິງວ່າຈະມີຄວາມຮັບຮູ້ໄດ້ ກ່ຽວກັບຄ່າຂອງປ່າໄມ້ສຳລັບເສດຖະກິດຂອງປະເທດ, ຄຸນະພາບຂອງສິ່ງແວດລ້ອມ ແລະ ການດຳລົງຊີວິດທາງສັງຄົມ, ພ້ອມກັບຄວາມພະຍາຍາມໃນການເພີ່ມອັດຕາຜົນກຳໄລ ແລະ ຄວາມຍືນຍົງຂອງຂະແໜງການແລ້ວ, ແຕ່ຂະແໜງປ່າໄມ້ຂອງລາວກໍຍັງປະເຊີນກັບຄວາມທ້າທາຍຫຼາຍຢ່າງ:

***ການຕັດໄມ້ທີ່ຜິດກົດໝາຍ ແລະ ບໍ່ມີຄວາມຍືນຍົງ.*** ຂະແໜງປ່າໄມ້ຂອງລາວນີ້ກຳລັງປະເຊີນກັບສິ່ງທ້າທາຍທີ່ຕໍ່ເນື່ອງ ເຊັ່ນ: ການຕັດໄມ້ແບບຜິດກົດໝາຍ ແລະ ບໍ່ຍືນຍົງ, ແມ່ນວ່າໄດ້ມີການຮັບຮູ້ ທີ່ເພີ່ມຂຶ້ນກ່ຽວກັບບັນຫານີ້ ແລະ ຄວາມພະຍາຍາມທີ່ເພີ່ມຂຶ້ນ ເພື່ອຈັດ ການ

***ກອບທີ 2. ການຄຸ້ມຄອງປ່າໄມ້ແບບຍືນຍົງ ເພື່ອຫວັງຜົນກຳໄລ ແລະ ເຮັດໃຫ້ໝາກຈອງອອກຜົນ***

ໃນບັນດາບ້ານທີ່ຢູ່ພາກໃຕ້ຂອງລາວ, ເຄື່ອງປ່າຂອງດົງ ແມ່ນມີຄວາມສຳຄັນຕໍ່ການຢູ່ລອດ. ໃນບາງບ້ານ ຢູ່ ເມືອງປະທຸມພອນ ແຂວງຈຳປາສັກ, ເຄື່ອງປ່າຂອງດົງແມ່ນສູງເຖິງ 89% ຂອງລາຍໄດ້ເປັນເງິນສົດ.

ໜຶ່ງໃນຜະລິດຕະພັນທີ່ສຳຄັນທີ່ສຸດໃນປ່າຂອງ ເມືອງ ປະທຸມພອນ ແມ່ນໝາກຈອງ, ເຊິ່ງເປັນຢາຫາກໄມ້ຊະນິດໜຶ່ງ. ແຕ່ວ່າຄວາມນິຍົມຂອງໝາກຈອງ ຢູ່ ເມືອງປະທຸມພອນ ນຳພາໄປສູ່ການທຳລາຍຂອງມັນ: ຄວາມຕ້ອງການຂ້ອນຂ້າງຫຼາຍ ແລະ ເຮັດໃຫ້ມີການຕັດຕົ້ນໄມ້ຈົນໝົດ, ສ່ວນຫຼາຍເປັນການກະທຳຂອງຄົນນອກ, ເຊິ່ງບໍ່ມີຄວາມສຳນຶກເຖິງ ຄວາມຍືນຍົງໃນອະນາຄົດ. ຄຸນະພາບຂອງການຜະລິດກໍຕ່ຳ, ຕົ້ນໄມ້ກໍກຳລັງຫາຍໄປ ຂໍ້ຂັດແຍ້ງ ກໍເພີ່ມຂຶ້ນ, ແລະ ຊຸມຊົນທ້ອງຖິ່ນກໍໄດ້ລາຄາຂ້ອນຂ້າງຕ່ຳ ສຳລັບຊັບພະຍາກອນທີ່ດີທີ່ສຸດທີ່ມີຢູ່.

ດ້ວຍການທີ່ເຄີຍຮ່ວມມືກັບຊາວບ້ານ ແລະ ອຳນາດການປົກຄອງທ້ອງຖິ່ນແລ້ວ, ອົງການ IUCN ກໍໄດ້ຈັດ ແລະ ເຝິກອົບຮົມ ໃຫ້ແກ່ກຸ່ມບ້ານ ທີ່ປູກໝາກຈອງ, ການເກັບກ່ຽວ ແລະ ຈຳໜ່າຍ, ການແກ້ໄຂຂໍ້ຂັດແຍ້ງ, ແລະ ເຮັດໃຫ້ມີການແບ່ງປັນຜົນກຳໄລ.

ຄວາມສຳເລັດຂອງໂຄງການສະແດງໃຫ້ເຫັນຢ່າງຈະແຈ້ງ: ວ່າມີຕົ້ນໝາກຈອງພຽງ 2 ຕົ້ນທີ່ຖືກຕັດໃນປີ 2009, ຖ້າທຽບໃສ່ປີ 2008 ທີ່ຕັດໄປ 2000 ຕົ້ນ; ຊາວບ້ານໄດ້ລາຍ ໄດ້ຫຼາຍກວ່າ ແລະ ດຽວນີ້ກໍສາມາດຄວບຄຸມ ແຫຼ່ງລາຍໄດ້ທີ່ສຳຄັນ ທີ່ສຸດ; ແລະ ຕົວແບບນີ້ກໍໄດ້ຜັນຂະຫຍາຍ ໄປສູ່ບ້ານອື່ນໆດ້ວຍ.

*(ຖ້າຕ້ອງການຂໍ້ມູນເພີ່ມເຕີມ ສາມາດເບິ່ງໄດ້ທີ່: www.iucn.org/lao)*



*ພາບໂດຍ: IUCN Lao PDR*

---

[23] ທະນາຄານໂລກ. 2008. *Lao PDR Economic Monitor 2008*.

[24] Tong 2009.

[25] Voladet, Saykham. 2009. ອຸດສາຫະກຳການປູກຝັງຢູ່ ລາວ: *ການສັງເກດການເບື້ອງໜ້າທີ່ຍົດບາດຂອງກະຊວງແຜນການ ແລະ ການລົງທຶນ.* ສະຖາບັນຄົ້ນຂວ້າເສດຖະກິດແຫ່ງຊາດ (NERI), ສະຖາບັນສາກົນເພື່ອການພັດທະນາແບບຍືນຍົງ (IISD), and International Union for Conservation of Nature (IUCN).

[26] ເບິ່ງ http://wwf.panda.org/what_we_do/where_we_work/greatermekong/our_solutions/sustainablerattan/ ສຳລັບຂໍ້ມູນເພີ່ມເຕີມ.

ກັບມັນກໍຕາມ (ເຊັ່ນ: ການສ້າງຕັ້ງກົມກວດກາປ່າໄມ້ບໍ່ດົນມານີ້, ທີ່ມີການຄວບຄຸມ ແລະ ການກວດກາໄມ້ທ່ອນ, ເຄື່ອງປ່າຂອງດົງ ລວມທັງການນຳໃຊ້ ແລະ ຄ້າຂາຍສັດປ່າ). ອີງໃສ່ກົດໝາຍ ແລະ ລະບຽບການຂອງລາວ, ລະບົບການຕັດໄມ້ຂອງປະເທດ ສາມາດສະຫຼຸບ ໄດ້ດັ່ງນີ້: ການຕັດໄມ້ ແມ່ນໄດ້ຮັບອະນຸຍາດສະເພາະພື້ນທີ່ປ່າຜະລິດທີ່ມີແຜນຄຸ້ມຄອງທີ່ໄດ້ຮັບຮອງເທົ່ານັ້ນ; ການຄຸ້ມຄອງປ່າໄມ້ຕ້ອງມີສ່ວນຮ່ວມຈາກຊຸມຊົນໃນທ້ອງຖິ່ນໃນກ

ານວາງແຜນ ແລະ ດຳເນີນການ ແລະ ຈະຕ້ອງມີການແບ່ງປັນ 25% ຂອງລາຍໄດ້ເພີ່ມຈາກໄມ້ທ່ອນ (ໝາຍວ່າ ຄວາມແຕກຕ່າງລະຫວ່າງລາຄາຂອງການຂາຍໃນຕົວຈິງ ກັບລາຄາຂາຍຕ່ຳສຸດຂອງລັດຖະບານໄດ້ຕັ້ງໄວ້); ແລະ ການສົ່ງອອກໄມ້ທ່ອນ ທີ່ຍັງບໍ່ທັນໄດ້ປຸງແຕ່ງ ແລະ ໄມ້ແປຮູບແມ່ນຜິດກົດໝາຍ, ເຊັ່ນດຽວ ກັບໄມ້ທີ່ໄດ້ມີຊື່ລະບຸໄວ້ໃນລາຍການຕົ້ນໄມ້ທີ່ມີຄ່າ. ອີງໃສ່ລາຍການນີ້ ແລ້ວ, ໄມ້ຈຳນວນພໍສົມຄວນທີ່ຖືກຕັດ ແລະ ສົ່ງອອກ ແມ່ນເຫັນວ່າ ຜິດກົດໝາຍ[27] (ເຊັ່ນ: ໄມ້ທີ່ຖືກເກັບກ່ຽວຈາກປ່າຜະລິດ ໂດຍບໍ່ມີແຜນ ຄຸ້ມຄອງ, ບໍ່ໄດ້ປຸງແຕ່ງ, ຫຼືວ່າຊຸມຊົນບໍ່ໄດ້ຮັບສ່ວນແບ່ງຈາກລາຍ ໄດ້ເສີມ). ຢ່າງໃດກໍຕາມ, ກຳລັງມີຄວາມຄືບໜ້າກ່ຽວກັບບັນຫາເຫຼົ່ານີ້. ໃນຈຳນວນ 51 ພື້ນທີ່ປ່າຜະລິດໃນປະເທດ, ໃນປີ 2010, ມີ 8 ເຂດທີ່ ໄດ້ມີການຮັບຮອງແຜນການຄຸ້ມຄອງ; ໃນພື້ນທີ່ເຫຼົ່ານີ້ເຄິ່ງໜຶ່ງຂອງຈຳນວນບ້ານໄດ້ຮັບສ່ວນແບ່ງຈາກລາຍໄດ້ ຈາກການຕັດໄມ້ (ສະເລ່ຍ ແລ້ວ ແມ່ນ 261 ໂດລາ ຕໍ່ບ້ານຕໍ່ປີ)[28]. ແຜນການຄຸ້ມຄອງ ແມ່ນ ກຳລັງກະກຽມເຮັດສຳລັບອີກ 8 ເຂດ, ແລະ ລັດຖະບານ ກໍມີທຶນສຳລັບການກະກຽມແຜນໃຫ້ພື້ນທີ່ປ່າຜະລິດອີກ 16 ເຂດ. ລັດຖະບານ ສປປ ລາວ ກໍຍັງໄດ້ພັດທະນາຂອດປະສານງານລະຫວ່າງ ພະແນກການຕ່າງໆ ແລະ ອົງການທີ່ມີສ່ວນຮ່ວມໃນຂະແໜງການນີ້, ເຊັ່ນ ມີການຈັດກອງປະຊຸມ ປະຈຳປີລະຫວ່າງອົງການທີ່ກ່ຽວຂ້ອງກັບປ່າໄມ້. ບົດລາຍງານມີຄວາມແຕກຕ່າງທາງດ້ານຂໍ້ມູນກ່ຽວກັບຂະໜາດ ເນື້ອທີ່ ແລະ ມູນຄ່າຂອງການຕັດໄມ້ທີ່ຜິດກົດໝາຍ ແລະ ການລັກລອບຂົນສົ່ງໄມ້ທ່ອນ ໃນ ສປປ ລາວ ແລະ ພູມິພາກ, ດັ່ງນີ້ ຈິ່ງເຮັດ ໃຫ້ພົບຄວາມຫຍຸ້ງຍາກໃນການໃຫ້ພາບທີ່ແນ່ນອນ. ໃນທ້າຍຊຸມປີ 1990, ອັດຕາການເກັບເງິນຄ່າພັນທະໄມ້ ແມ່ນໄດ້ມີການຄາດຄະເນວ່າ ມັນຕ່ຳເຖິງ 50% ແລະ ກໍຍັງຢູ່ໃນລະດັບຕ່ຳໃນປະຈຸບັນ[29]. ໃນປີ 2000 ADB ໄດ້ຄາດຄະເນວ່າການຕັດໄມ້ແບບຜິດກົດໝາຍ ຫຼື ການຂຸດຄົ້ນທີ່ບໍ່ມີການຄຸ້ມຄອງດີ ໄດ້ສ້າງຄວາມເສຍຫາຍໃຫ້ລັດຖະບານ ລາວ ເຖິງ 20 ລ້ານໂດລາ ຕໍ່ປີ[30]. ໃນປີ 2006 ມີການຄາດຄະເນວ່າ ມີໄມ້ທ່ອນ ປະມານ 600,000 ມ$^3$ ຖືກຕັດໂດຍຜິດກົດໝາຍ, ຊຶ່ງມີມູນຄ່າ ຕະຫຼາດເຖິງ 250 ລ້ານໂດລາ[31]. ໄດ້ມີການສຶກສາໃນປີ 2010 ກ່ຽວກັບການຄ້າໄມ້ທ່ອນ ລະຫວ່າງ ສປປ ລາວ ແລະ ຫວຽດນາມ ພົບວ່າ ໂດຍສະເລ່ຍແລ້ວ ການໃຊ້ຈ່າຍເພີ່ມເຕີມໃນຫຼາຍລະດັບແມ່ນມີມູນຄ່າ 13 ໂດລາ ຕໍ່ ແມັດກ້ອນຂອງໄມ້ທ່ອນທີ່ໄດ້ສົ່ງອອກໄປຫວຽດນາມ. ຖ້າຄາດຄະເນເປັນຕົວເລກແມ່ນປະມານ 600,000 ແມັດກ້ອນ, ເປັນເງິນປະມານ 7.8 ລ້ານໂດລາຕໍ່ປີ[32]. ເຖິງແມ່ນວ່າຍັງມີຂໍ້ສົງໃສໃນຕົວເລກ, ແຕ່ກໍສາມາດເຫັນໄດ້ຊັດເຈນວ່າ, ນອກຈາກຈະສ້າງຄວາມສູນເສຍທາງການເງິນໃຫ້ລັດຖະບານລາວ, ຊຸມຊົນ ແລະ ບໍລິສັດທີ່ດຳເນີນການຖືກຕ້ອງຕາມກົດໝາຍແລ້ວ, ການຕັດໄມ້ແບບຜິດກົດໝາຍ ແລະ ການລັກລອບຂົນສົ່ງໄມ້ທ່ອນ ແມ່ນອາດຍັງມີສ່ວນເຮັດໃຫ້ເກີດຄວາມເສຍຫາຍຫຼາຍຕໍ່ການບໍລິການສິ່ງແວດລ້ອມຂອງປ່າໄມ້ ແລະ ໄປຄຽງ ຄູ່ກັບທຸກໆຜົນກະທົບທີ່ກ່ຽວຂ້ອງນັ້ນ.



ພາບໂດຍ: IUCN Lao PDR

***ຄວາມຫຍຸ້ງຍາກສຳລັບການສົ່ງເສີມການຄຸ້ມຄອງປ່າໄມ້ແບບຍືນຍົງ.*** ມີເງື່ອນໄຂຫຼາຍຢ່າງໃນຂະແໜງການປ່າໄມ້ ແລະ ອຸດສາຫະກຳທີ່ກ່ຽວຂ້ອງ ທີ່ເພີ່ມຄວາມຫຍຸ້ງຍາກໃຫ້ແກ່ການ ສົ່ງເສີມການຄຸ້ມຄອງແບບຍືນຍົງ, ໂດຍສະເພາະ ຄວາມຖືກຕ້ອງທາງກົດໝາຍ ແລະ ຄວາມຍືນຍົງທີ່ສາມາດພິສູດ ຫຼື ຢືນຢັນໄດ້. ການຈັດຕັ້ງປະຕິບັດແບບແຜນປ່າໄມ້ຍືນຍົງ ຈະຕ້ອງມີການລົງທຶນລ່ວງໜ້າທີ່ສຳຄັນກ່ອນ, ເຊິ່ງອາດຈະເປັນ ສິ່ງທ້າທາຍສຳລັບຫຼາຍໆວິສາຫະກິດປ່າໄມ້. ພ້ອມນັ້ນກໍຍັງມີຄວາມຕ້ອງການກ່ຽວກັບການສ້າງຄວາມສາມາດທາງດ້ານວິຊາການ, ການຄຸ້ມຄອງ ແລະ ການບັງຄັບໃຊ້ລະບຽບກົດໝາຍ ເຊິ່ງຍັງຕ້ອງໄດ້ເຮັດໃຫ້ດີຂຶ້ນໃນ ສປປ ລາວ. ນອກນັ້ນ, ການດຳເນີນງານບົນພື້ນຖານທີ່ບໍ່ມີຄວາມເທົ່າທຽມກັນ ໃນຂະແໜງການປ່າໄມ້ ຂອງ ລາວມັນ ເປັນສິ່ງສ້າງຄວາມຍໍ້ທໍ້ຕໍ່ການລົງທຶນ ໃນການຄຸ້ມ ຄອງປ່າໄມ້ ແລະ ການຂຸດຄົ້ນໄມ້ແບບຍືນຍົງ ເຊັ່ນວ່າ: ເປັນຫຍັງ ບໍລິສັດໜຶ່ງຈຶ່ງຕ້ອງລົງທຶນໃນການດຳເນີນກິດຈະການ ໄມ້ທີ່ຍືນຍົງ ແລະ ຖືກຕ້ອງຕາມກົດໝາຍ ໃນຂະນະທີ່ຄູ່ແຂ່ງອາດ ຈະບໍ່ປະຕິບັດ ຕາມກົດໝາຍ ດ້ວຍຊ້ຳ? ຊ່ອງວ່າງ ແລະ ຂໍ້ລະບຸ ທີ່ອະນຸຍາດພິເສດ ໃຫ້ສາມາດຕັດໄມ້ເພື່ອການສົ່ງອກໄດ້, ເຊັ່ນ: ການອະນຸຍາດຕັດ ໄມ້ໃນກໍລະນີບຸກ ເບີກທີ່ດິນສຳລັບປູດຝັງ ແລະ ໂຄງການສ້າງພື້ນຖານ ໂຄງລ່າງ, ອາດເຮັດໃຫ້ຄວາມຖືກຕ້ອງ ຕາມກົດໝາຍ ແລະ ຄວາມຍືນຍົງ ບໍ່ມີຄວາມຈະແຈ້ງໃນຫຼາຍກໍລະນີ. ນອກຈານັ້ນ, ຕະຫຼອດປາຍທາງສຳລັບໄມ້ທ່ອນຂອງ ລາວ ແລະ ຜະລິດຕະພັນຈາກ ໄມ້ທ່ອນ ໂດຍລວມແລ້ວແມ່ນ ຂາດຂໍ້ຮຽກຮ້ອງຈາກຜູ້ບໍລິໂພກ ຫຼື ບໍ່ມີພັນທະຕໍ່ຄວາມຖືກຕ້ອງທາງກົດໝາຍ ຫຼື ຄວາມຍືນຍົງ. ສິ່ງ ເຫຼົ່ານີ້ໄດ້ລວມເຖິງຕະຫຼາດພາຍໃນຂະໜາດໃຫຍ່, ແລະ ຕະຫຼາດໃນ ພູມິພາກ ເຊັ່ນ: ໃນຈີນ ແລະ

---

[27] Environmental Investigation Agency (EIA) and Telepak. 2008. *Borderlines: Vietnam's Booming Furniture Industry and Timber Smuggling in the Mekong Region;* and FAO/TNC 2008, cited in Forest Trends and DFID. 2010. *Timber Markets and Trade between Laos and Vietnam: A Commodity Chain Analysis of Vietnamese-Driven Timber Flows.*

[28] SUFORD. 2010. *ບົດລາຍງານປະຈຳປີ 200910 [ຮ່າງ].*

[29] FS2020.

[30] ກ່າວໄວ້ໃນ Tong, 2009.

[31] EIA ແລະ Telepak, 2008.

[32] Forest Trends ແລະ DFID, 2010.

ຫວຽດນາມ. ຢ່າງໃດກໍຕາມ, ຖ້າເບິ່ງ ໃນແງ່ດີແລ້ວ, ທັງ ຈີນ ແລະ ຫວຽດນາມ ເປັນຜູ້ສົ່ງອອກ ຕໍ່ຜະລິດ ຕະພັນໄມ້ສຳເລັດຮູບທີ່ໃຫຍ່, ລະບົບກົດລະບຽບຄຸ້ມຄອງໃໝ່ ກຳລັງ ຖືກນຳໃຊ້ຢູ່ ປະເທດ ອາເມລິກາ ແລະ ສະຫະພາບເອີລົບ ເພື່ອກົດ ດັນບັນດາບໍລິສັດ ໃຫ້ເອົາໃຈໃສ່ກ່ຽວກັບຄວາມຖືກຕ້ອງທາງກົດໝາຍ ແລະ ຄວາມຍືນຍົງ ຂອງການສະໜອງໄມ້ທ່ອນ. ມີການຄາດຄະເນວ່າ ຜົນດັ່ງກ່າວຈະມີຕໍ່ ຜູ້ຈັດສົ່ງໄມ້ໃນ ສປປ ລາວ ໃນທີ່ສຸດ. ອີງການ Forest Trends ແລະ ກະຊວງເພື່ອການພັດທະນາສາກົນ ຂອງສະຫະລາດຊະອານາຈັກ ອັງກິດ (DFID) ກໍໄດ້ບັນທຶກໄວ້ວ່າ "ບໍລິສັດຫວຽດນາມທີ່ປະສົງຢາກສົ່ງອອກສູ່ຕະຫຼາດສະຫະພາບເອີລົບ ແລະ ຕະຫຼາດ ອາເມລິກາ ໄດ້ລາຍງານວ່າ ພວກເຂົາ ບໍ່ໄດ້ນຳເອົາໄມ້ມາຈາກປະເທດ ລາວ ແລ້ວ ຍ້ອນ ຄວາມສ່ຽງທາງດ້ານ ຊື່ສຽງ"[33].

### *ການຂາດການມີສ່ວນຮ່ວມຂັ້ນຊຸມຊົນ/ບ້ານ ແລະ ສິ່ງຈູງໃຈ.*

ເຖິງແມ່ນວ່າ ການຄຸ້ມຄອງປ່າໄມ້ແບບມີສ່ວນຮ່ວມແມ່ນເປົ້າໝາຍ ຂອງ ນະໂຍບາຍ ຂອງ ສປປ ລາວໃນຂະແໜງການປ່າໄມ້, ແຕ່ ຄວາມຄືບໜ້າກໍຍັງຊັກຊ້າ ໃນການສ້າງຕັ້ງການມີສ່ວນຮ່ວມທີ່ແທ້ຈິງ ແລະ ການຄຸ້ມຄອງປ່າໄມ້ແບບຍຸດຕິທຳ. ດັ່ງທີ່ກ່າວໄວ້ຂ້າງເທິງນັ້ນ, ຊັບພະຍາກອນປ່າໄມ້ແມ່ນສິ່ງສຳຄັນທີ່ຂາດບໍ່ໄດ້ ຂອງການດຳລົງຊີວິດຂອງປະຊາຊົນລາວສ່ວນໃຫຍ່, ບໍ່ວ່າຈະເປັນ ອາຫານ, ຢາປົວພະຍາດ, ພະລັງງານ, ບ່ອນຫຼົບໄພ ແລະ ເປັນແຫຼ່ງສ້າງລາຍຮັບເປັນເງິນສົດ. ອຳນາດການປົກຄອງບ້ານກໍໄດ້ຖືກມອບໝາຍໜ້າທີ່ນັບມື້ນັບເພີ່ມຂຶ້ນ ໂດຍມີພັນທະໃນການຄຸ້ມຄອງປ່າຜະລິດ ແລະ ປ່າປ້ອງກັນ. ຢ່າງໃດ ກໍຕາມ, ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ, ບໍ່ແມ່ນທຸກບ້ານ ຈະໄດ້ສ່ວນແບ່ງ ຈາກລາຍໄດ້ການຕັດໄມ້ (ຕົ້ນຕໍ ແມ່ນຍ້ອນບາງບ້ານ ໃນເຂດປ່າຜະລິດຍັງບໍ່ທັນມີໄມ້ທີ່ສາມາດຕັດ ໄດ້ໃນຂະນະນີ້). ໂດຍບວກໃສ່ກັບຄວາມສາມາດຂອງເຈົ້າໜ້າທີ່ ໃນຂັ້ນສູງ ໃນການຈັດສັນປ່າໄມ້ ຫຼື ດຳເນີນໂຄງການອື່ນໆ, ຈຶ່ງບໍ່ໄດ້ສ້າງສິ່ງຈູງໃຈສຳລັບຊາວບ້ານ ໃນການເຂົ້າຮ່ວມການຄຸ້ມຄອງ ຫຼື ການປົກປັກຮັກສາແບບຍືນຍົງ. ຍິ່ງໄປກວ່ານັ້ນ, ຄວາມສາມາດຂອງວິສະຫະກິດໄມ້ ໃການຈັດຫາແຮງງານທ້ອງຖິ່ນ ແມ່ນຍັງບໍ່ທັນໄດ້ປະຕິບັດຢ່າງເຕັມເມັດເຕັມໜ່ວຍສະເໝີໄປ. ຕົວຢ່າງ ອີງການ Forest Trends ແລະ DFID ໄດ້ບັນທຶກໄວ້ວ່າ ບໍລິສັດຫວຽດນາມ ແລະ ແຮງງານຄົນຫວຽດນາມ ແມ່ນມີບົດບາດ ສຳຄັນໃນອຸດສາຫະກຳໄມ້ທ່ອນຂອງ ສປປ ລາວ. ບໍລິສັດເຫຼົ່ານີ້ຈ້າງແຮງງານທ້ອງຖິ່ນພຽງໜ້ອຍດຽວ, ຕົວຢ່າງ ຢູ່ແຂວງອັດຕະປື, ໄດ້ພົບເຫັນທຸກໆບໍລິສັດທີ່ໄດ້ສຳພາດແມ່ນມີຜູ້ຈັດການເປັນຄົນຫວຽດນາມ ແລະ ນຳໃຊ້ແຮງງານຫວຽດນາມເຊັ່ນດຽວກັນ (ບາງຄັ້ງກໍບໍ່ມີສັນຍາວ່າຈ້າງ)[34]

### *ການພັດທະນາການປູກໄມ້ ແບບບໍ່ຍືນຍົງ.*

ຄືດັ່ງທີ່ໄດ້ບັນທຶກໄວ້ຂ້າງເທິງ, ການປູກໄມ້ອຸດສາຫະກຳນີ້ ແມ່ນປັດໄຈສຳຄັນຂອງແຜນລັດຖະບານ ສຳລັບຂະແໜງປ່າໄມ້ ແລະ ຄວາມພະຍາຍາມໃນການດຶງດູດການລົງທຶນ. ການກະສິກຳ ແລະ ກະສິກຳ-ປ່າໄມ້ ແບບປະສົມປະສານຮ່ວມກັນເປັນໜຶ່ງໃນ 4 ຂະແໜງ ບຸລິມະສິດ ສຳລັບການລົງທຶນ ແລະ ການສ້າງເປັນອຸດສາຫະກຳ[35], ແລະ ຍຸດທະສາດປ່າໄມ້ຂອງລາວ ຄາດວ່າຈະປູກຕົ້ນໄມ້ໃຫ້ໄດ້ 500,000 ເຮັກຕາ ພາຍໃນປີ 2020[36]. ຢ່າງໃດກໍຕາມ, ຜົນປະໂຫຍດ ຂອງສວນປູກໄມ້ເຫຼົ່ານັ້ນ, ເຊັ່ນ ການໄຫຼເຂົ້າຂອງການລົງທຶນທີ່ເພີ່ມຂຶ້ນ, ປະກອບສ່ວນໃນການພັດທະນາຊົນນະບົດ, ແລະ ເປັນທ່າແຮງ ໃນການທົດແທນການຖາງປ່າເຮັດໄຮ່, ທີ່ກຳລັງໄດ້ຮັບການຊັ່ງຊາເພີ່ມ ຂຶ້ນຖ້າທຽບໃສ່ຜົນກະທົບໃນດ້ານລົບກ່ຽວກັບສິ່ງແວດລ້ອມ ແລະ ສັງຄົມ. ທີ່ດິນຈຳນວນຫຼວງຫຼາຍສຳລັບການປູກໄມ້ແບບອຸດສາຫະກຳ ອາດເປັນໄພຂົ່ມຂູ່ຕໍ່ປ່າໄມ້, ແລະ ພື້ນທີ່ປູກໄມ້ ອາດຈະມາແທນພື້ນທີ່ ທີ່ປະຊາຊົນໃນທ້ອງຖິ່ນຊົມໃຊ້ໃນການຜະລິດອາຫານ, ເຊິ່ງເຮັດໃຫ້ເກີດ ຄວາມກັງວົນເຖິງຄວາມປອດໄພທາງດ້ານສະບຽງອາຫານ. ສວນປູກໄມ້ ຂະໜາດໃຫຍ່ນັ້ນ ກໍຍັງອາດຈະນຳໄປສູ່ການນຳເອົາແຮງງານຕ່າງ ປະເທດເຂົ້າມາ, ການເພີ່ມການຈ້າງແຮງງານເດັກນ້ອຍ ແລະ ການ ດຳລົງຊີວິດທີ່ດັ້ງເດີມມີການປ່ຽນແປງຢ່າງໃຫຍ່ຫຼວງ. ການພັດທະນາ ການປູກໄມ້ຢູ່ ສປປ ລາວ ມາຮອດປະຈຸບັນ ຍັງໄດ້ສ້າງຄວາມກັງວົນກ່ຽວກັບຜົນກະທົບທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດທີ່ຊອກເຫັນໄດ້ບໍ່ທັນຊັດເຈນ ແລະ ມີການຄຸ້ມຄອງບໍ່ທັນດີ. ເຖິງແມ່ນຈະມີຂໍ້ກຳນົດທາງດ້ານນິຕິກຳກໍຕາມ, ແຕ່ໂຄງການປູກໄມ້ພຽງບໍ່ເທົ່າໃດໂຄງການ ທີ່ໄດ້ດຳເນີນການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIAs) ຫຼື ໄດ້ສ້າງແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMPs)[37].

### *ຄວາມບໍ່ມີປະສິດທິພາບຢ່າງຕໍ່ເນື່ອງໃນອຸດສາຫະກຳປຸງແຕ່ງໄມ້.*

ເຖິງແມ່ນວ່າຈະມີຄວາມພະຍາຍາມໃນການປັບປຸງ ແລະ ເຮັດໃຫ້ອຸດສາຫະກຳປຸງແຕ່ງໄມ້ລາວທັນສະໄໝຂຶ້ນ, ມັນກໍຍັງປະສົບກັບຄວາມບໍ່ມີປະສິດທິພາບ ຖ້າທຽບແລ້ວ, ໂດຍມີອັດຕາການຄຸ້ມທຶນຄືນ ແລະ ອັດຕາຜົນກຳໄລຕ່ຳ. ການທີ່ຈະນຳໄປສູ່ການປຸງແຕ່ງໄມ້ທີ່ມີລາຄາສູງ ແມ່ນຍັງຖືກຂັດຂວາງ ຈາກການຕອບສະໜອງວັດຖຸດິບທີ່ຈຳກັດ ແລະ ບໍ່ແນ່ນອນ, ປະສິດທິພາບໃນການນຳໃຊ້ວັດຖຸດິບຍັງຕ່ຳ, ການເຂົ້າຫາການເງິນທີ່ມີໜ້ອຍ, ຈຳນວນຄົນງານທີ່ມີຄວາມສາມາດ ແມ່ນມີໜ້ອຍ ແລະ ລະດັບຂອງເຕັກໂນໂລຊີທີ່ຕ່ຳ. ດັ່ງນີ້ການສົ່ງອອກທີ່ມີມູນຄ່າສູງ ເຊັ່ນ: ເຄື່ອງເຮືອນຍັງຄົງຢູ່ໃນລະດັບຕ່ຳ, ລະຫວ່າງ 1.7-3.2% ຂອງມູນຄ່າລວມ[38]. ກ່ຽວກັບບັນຫາຂອງການສະໜອງ, ຄວາມສາມາດຜະລິດຂອງອຸດສາຫະກຳ ໃນປະຈຸບັນຍັງຢູ່ເໜືອຄວາມສາມາດສະໜອງ, ແມ້ວ່າລັດຖະບານລາວໄດ້ພະຍາຍາມຍົກເລີກບັນດາທຸລະກິດທີ່ບໍ່ມີປະສິດທິພາບ ແລະ ຜິດກົດໝາຍແລ້ວ.

## 5. ເຮັດແນວໃດເພື່ອມີການລົງທຶນໃນປ່າໄມ້ລາວຫຼາຍຂຶ້ນ?

ວິໄສທັດຂອງປ່າໄມ້ໃນ ສປປ ລາວໃນຍຸດທະສາດປ່າໄມ້ FS2020 ແມ່ນໃຫ້ເປັນ "ຂະແໜງປ່າໄມ້ທີ່ມີຂະໜາດໃຫຍ່, ແຂງແຮງ, ໝັກເໜັ້ນ ໂດຍສືບຕໍ່ມີບົດບາດເປັນຂະແໜງນຳໃນການພັດທະນາເສດຖະກິດ ສັງຄົມ, ນຳພາໂດຍວິທີການຄຸ້ມຄອງທາງວິທະຍາສາດທີ່ຍືນຍົງ ແລະ ສາມາດຫຼຸດຜ່ອນຄວາມທຸກຍາກ ແລະສະໜອງຜົນປະໂຫຍດໃຫ້ທົ່ວສັງຄົມ". ເພື່ອເປັນການປະກອບສ່ວນຕໍ່ວິໄສທັດດັ່ງກ່າວ, ການລົງທຶນໃນຂະແໜງ

---

[33] Forest Trends ແລະ DFID, 2010.

[34] Forest Trends ແລະ DFID, 2010.

[35] Voladet, 2009.

[36] FS2020.

[37] ຕົວຢ່າງ, ເບິ່ງ Hicks, et al, 2009.

[38] CPI, NSCແລະ UNDP, 2006, ທີ່ກ່າວໃນ Tong, 2009.

### *ກອບທີ 3. ຄຳແນະນຳສຳລັບການປະຕິຮູບອຸດສາຫະກຳໄມ້*

ອີງໃສ່ບົດສຶກສາຮ່ວມຂອງໂຄງການ SUFORD ແລະ ກະຊວງກະສິກຳ-ປ່າໄມ້ (MAF) ແລ້ວ, ອຸດສາຫະກຳໄມ້ຂອງລາວ ແມ່ນຕົກຢູ່ໃນສະຖານະການທີ່ຫຍຸ້ງຍາກ ມີກຳໄລທີ່ຫາຍາກ ແລະ ຍັງບໍ່ເຫັນວ່າເປັນຕາໜ້າເຊື່ອຖື. ມີບໍລິສັດຂະໜາດໃຫຍ່ ຫາ ຂະໜາດກາງຈະນວນຫຼາຍ ທີ່ກຳລັງແຂ່ງຂັນກັນເພື່ອການຈັດ ສົ່ງວັດຖຸດິບ ແບບຈຳກັດ, ເຊິ່ງໄດ້ມີການນຳໃຊ້ແບບບໍ່ມີປະສິດທິພາບ, ແລະ ບາງບໍລິສັດທີ່ໄດ້ປິດໄປແລ້ວກໍຍັງດຳເນີນກິດຈະກຳຕໍ່ໄປແບບຜິດກົດໝາຍ. ມີຄວາມຈຳເປັນທີ່ຈະຕ້ອງ ເຮັດໃຫ້ເກີດການປ່ຽນແປງຄັ້ງໃຫຍ່, ແຕ່ວ່າເຮັດແນວໃດຈິ່ງນຳພາການປ່ຽນແປງ ແລະ ການເຮັດໃຫ້ທັນສະໄໝ ໃຫ້ເປັນໄປໄດ້ ໂດຍບໍ່ມີຄວາມຍາກລຳບາກ ແລະ ຂັດແຍ້ງຫຼາຍ? ບົດສຶກສາ◌ິ◌້ໄດ້ລວບລວມເອົາຄຳແນະນຳ ດັ່ງຕໍ່ໄປນີ້:

1. ບາດກ້າວທຳອິດ, ລັດຖະບານລາວ ມີຄວາມຈຳເປັນຕ້ອງທຳການປຶກສາຫາລືກັບທຸກໆ ພາກສ່ວນທີ່ກ່ຽວຂ້ອງໃນອຸດສາຫະກຳນີ້ ເພື່ອສົນທະນາກັນກ່ຽວກັບວິທີທາງເລືອກ ແລະ ເພື່ອສ້າງຄວາມຍິນຍອມໃນ "ວິໄສທັດ" ສຳລັບອະນາຄົດ. ສິ່ງເຫຼົ່ານີ້ຈະບໍ່ຕ້ອງເຈາະຈົງອີງ ສະເພາະການຜະລິດ, ແຕ່ຄວນສ້າງເປົ້າໝາຍ ສຳລັບປັດໄຈທີ່ມີສ່ວນຮ່ວມ ເພື່ອອຸດສາຫະກຳທີ່ມີປະສິດທິພາບ ແລະ ທັນສະໄໝ ເຊັ່ນ Chain of Custody, ມາດຖານທາງດ້ານຄຸນະພາບ, ສຸຂະພາບ ແລະ ຄວາມປອດໄພ, ປະສິດທິພາບ ແລະ ການບໍລິຫານທຸລະກິດ. "ທຸລະກິດແບບທີ່ເຄີຍມີມາ" ບໍ່ແມ່ນທາງເລືອກທີ່ເປັນສິ່ງດຶງດູດ; ຈະຕ້ອງມີການປ່ຽນແປງໃນ ໄວໆນີ້ ເພື່ອບ່ຽງບ່າຍການຍຸບລົງຢ່າງຊ້າໆ ຂອງອຸດສາຫະກຳ ຍ້ອນການຂາດທຶນ ແລະ ວັດຖຸດິບ. ການມີວິໄສທັດ ທີ່ຊັດເຈນຈະຊ່ວຍລັດຖະບານລາວ ໃນການຊອກຫາທຶນສຳລັບແຜນງານສຳຄັນ ຂອງການລົງທຶນ ເພື່ອການອອກແບບໂຮງງານ ຜູ້ຈັດການຝຶກອົບຮົມ ແລະ ຄົນງານຄືນ.

2. ໃນປະຈຸບັນນີ້ ມີຄວາມຫຍຸ້ງຍາກຢູ່ແລ້ວ ໃນການບັງຄັບປະຕິບັດຕາມລະບຽບການ, ເຊິ່ງມີຜົນເສຍ ຕໍ່ບໍລິສັດທີ່ດຳເນີນກິດຈະການຖືກຕ້ອງຕາມກົດໝາຍ. ວິທີການທີ່ຈະມີຜົນເສຍໜ້ອຍກວ່າ ແມ່ນການຫາສິ່ງຈູງໃຈໃຫ້ແກ່ຜູ້ທີ່ຄວບຄຸມ ແລະ ຜູ້ທີ່ຮ່ວມກິດຈະກຳພາຍໃນບໍລິສັດ. ການສ້າງເງື່ອນໄຂສຳລັບການຈັດສັນການຕັດໄມ້, ເຊັ່ນ ຄວາມສາມາດທີ່ພຽງພໍໃນການປຸງແຕ່ງໃນຂະໜາດທີ່ຕ່ຳສຸດ, ແລະ ມີການຮຽກຮ້ອງໃຫ້ສະໜອງໄມ້ທ່ອນທີ່ຜະລິດນັ້ນຄວນມີໄວ້ສຳລັບ SMEs ແລະ ຄວນສະໜັບສະໜູນບໍລິສັດຂະໜາດກາງໃຫ້ເຊື່ອມໂຍງກັນ.

3. ແມ່ນມີຄວາມຮີບດ່ວນສຳລັບລັດຖະບານລາວ ໃນການເຮັດການປະເມີນພື້ນທີ່, ຈັດປະເພດອາຍຸ, ອັດຕາຜົນຕອບແທນ ແລະ ການຜະລິດທີ່ຄາດຄະເນໄວ້ຂອງພືດຜົນຂອງການປູກຕໍ່ຊະນິດໄມ້, ລວມທັງຕົ້ນຢາງ, ແລະ ປະກາດຂໍ້ມູນໂດຍເຈົ້າໜ້າທີ່ເມືອງ. ສິ່ງເຫຼົ່ານີ້ຈະເຮັດໃຫ້ການຄັດເລືອກສະຖານທີ່ທີ່ເໝາະສົມຕໍ່ ອຸດສາຫະກຳໄມ້ ເພື່ອອຳນວຍຄວາມສະດວກໃນອະນາຄົດ. ການຄາດຄະເນການຜະລິດປ່າທຳມະຊາດພາຍໃຕ້ເງື່ອນໄຂການຄຸ້ມຄອງທີ່ຍືນຍົງຕາມຊະນິດພັນ ແມ່ນຄວນມີການກະກຽມ ແລະ ປະກາດເປັນທາງການ.

4. ລັດຖະບານລາວຄວນລິເລີ່ມ ການສົນທະນາກັບບັນດາບໍລິສັດສາກົນສ່ວນໃຫຍ່ ທີ່ມີຄວາມຜູກມັດໃນການສ້າງສວນປູກໄມ້ ເພື່ອທຳການທົບທວນຄືນກ່ຽວແຜນການຜະລິດໃນອະນາຄົດ, ເນື່ອງຈາກວ່າມີການປ່ຽນແປງໄປບໍ່ດົນມານີ້ ກ່ຽວກັບສະພາບຂອງເສດຖະກິດຂອງໂລກ. ແມ່ນມີຄວາມສຳຄັນໃນການປະເມີນຄວາມເປັນໄປໄດ້ ຂອງການນຳໃຊ້ສ່ວນໜຶ່ງຂອງໝາກຜົນໃຫ້ເປັນວັດຖຸດິບ ສຳລັບເລື່ອຍເຊັ່ນດຽວກັບການຈັດຫາແຜ່ນໄມ້ອັດ. ການມີສ່ວນຮ່ວມຂອງການປຸງແຕ່ງໄມ້ໃນ ສປປ ລາວຖ້າຫຸງບໃສ່ເຍື່ອໄມ້ທີ່ສົ່ງອອກ ຫຼື ເສດໄມ້ ແມ່ນຄວນມີການວິເຄາະ ແລະ ສົນທະນາ

*(ແຫຼ່ງຂໍ້ມູນ: ກະຊວງກະສິກຳ-ປ່າໄມ້ ແລະ ໂຄງການປ່າໄມ້ຍືນຍົງ ສຳລັບການພັດທະນາຊົນນະບົດ (SUFORD). 2009. "ວາລະໂອກາດໃນການປັບໂຄງຮ່າງອຸດສາຫະກຳໄມ້ໃນ ສປປ ລາວ")*

ປ່າໄມ້ຕ້ອງຖືກຄຸ້ມຄອງຢ່າງລະມັດລະວັງ ແລະ ບໍລິຫານເພື່ອໃຫ້ມີຜົນກະທົບທາງບວກໃຫ້ຫຼາຍທີ່ສຸດ ແລະ ຫຼຸດຜົນກະທົບທາງລົບໃຫ້ໜ້ອຍທີ່ສຸດ. ຜູ້ຕັດສິນໃຈໃນການລົງທຶນຄວນພິຈາລະນານະໂຍບາຍຕ່າງໆດັ່ງຕໍ່ໄປນີ້:

- ***ສົ່ງເສີມປະເພດການລົງທຶນຕ່າງໆເພື່ອມີຄວາມຫຼາກຫຼາຍຂື້ນ.*** ນອກຈາກເຂດປ່າຜະລິດເຊິ່ງເປັນເຂດດຳເນີນການໂດຍລັດ ຫຼື ການສຳປະທານໃຫ້ນັກລົງທຶນຕ່າງປະເທດ, ຍັງມີປະເພດການລົງທຶນໃນຂະແໜງປ່າໄມ້ຫຼາຍຊະນິດ ທີ່ສາມາດຊ່ວຍເຫຼືອລັດຖະບານລາວໃຫ້ບັນລຸເປົ້າໝາຍການພັດທະນາໃນໄລຍະຍາວ. ຊຸມຊົນ ແລະ ການຄຸ້ມຄອງປ່າໄມ້ແບບມີສ່ວນຮ່ວມ ແລະ ວິສາຫະກິດປ່າໄມ້ສາມາດຊ່ວຍເຫຼືອຮັບປະກັນການຮ່ວມມືຈາກທ້ອງຖິ່ນໃນການຄຸ້ມຄອງປ່າໄມ້ ເພື່ອໃຫ້ທ້ອງຖິ່ນໄດ້ຮັບຜົນປະໂຫຍດນຳກັນ. ຄວາມໝາຍຂອງການຄຸ້ມຄອງປ່າໄມ້ແບບປະຊາຊົນມີສ່ວນຮ່ວມແບບຍືນຍົງ ໂດຍອີງການ SUFORD ແມ່ນຖືວ່າມີຄວາມຍືນຍົງ, ໂດຍສະເພາະ ເມື່ອເບິ່ງທາງດ້ານການຜະລິດຫຼາຍກວ່າທາງດ້ານອະນຸລັກຕາມຈຸດປະສົງຂອງເຂດປ່າຜະລິດ, ໂດຍອີງໃສ່ການປະເມີນດ້ານຊີວະນານາພັນໃນເຂດປ່າສະຫງວນເບື້ອງຕົ້ນລ້າສຸດ[39]. ການສຶກສາວິໃຈຂອງໂຄງການ SUFORD ກໍຍັງສະແດງໃຫ້ເຫັນວ່າ ອັດຕາການທຳລາຍປ່າມີຄວາມຄົງທີ່ ຫຼື ບໍ່ກໍຫຼຸດລົງ ໃນຂະນະທີ່ມີການເພີ່ມຂຶ້ນນອກເຂດທີ່ບໍ່ແມ່ນເຂດປ່າຜະລິດ[40]. ການເຮັດສວນປູກໄມ້ ຂະໜາດນ້ອຍທີ່ໄດ້ອອກແບບ ແລະ ມີການຄຸ້ມຄອງທີ່ດີ ກໍ່ສາມາດສ້າງລາຍໄດ້ຫຼາກຫຼາຍໃຫ້ຊາວສວນໄດ້. ການລິເລີ່ມກ່ຽວກັບການຂາຍກາກບອນທີ່ເກັບສະສົມຢູ່ໃນ ປ່າໄມ້ ຫຼື ການບໍລິການທາງດ້ານສິ່ງແວດລ້ອມອື່ນໆ ກໍ່ຍັງສາມາດສ້າງລາຍໄດ້ ໂດຍທີ່ບໍ່ຕ້ອງຕັດໄມ້ອອກ.

- ***ປັບປຸງອຸດສາຫະກຳປຸງແຕ່ງໄມ້ພາຍໃນ.*** ດັ່ງທີ່ໂຄງການ SUFORD ແລະ ກະຊວງກະສິກຳ ແລະ ປ່າໄມ້ (2009) ແລະ ການສຶກສາວິໃຈອື່ນໆໃນຂະແໜງປ່າໄມ້ລາວໄດ້ໃຫ້ຂໍ້ສັງເກດ, ຕ້ອງມີການປັບປຸງອຸດສາຫະກຳປຸງແຕ່ງໄມ້ຢ່າງຮີບດ່ວນ ເພື່ອຢຸດຢັ້ງບັນຫາການລົ້ມທະລາຍຂອງອຸດສາຫະກຳປຸງແຕ່ງໄມ້ ແລະຫຼຸດຜ່ອນການກໍ່ຄວາມ

[39] MAF & SUFORD (Additional Financing). 2010. *Preliminary Biodiversity Assessment and Management Recommendations of SUFORD-AF Production Forest Areas.*

[40] Information provided by SUFORD, 2010.

ເຊື່ອມໂຊມຂອງອຸດສາຫະກຳດັ່ງກ່າວຕໍ່ປ່າໄມ້ລາວ. ດັ່ງອະທິບາຍໃນກອບທີ 3 (ຂ້າງເທິງນີ້), ລັດຖະບານແຫ່ງ ສປປ ລາວ ອາດຈະພິຈາລະນາການປຶກສາຫາລືລະຫວ່າງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອພັດທະນາວິໄສທັດ ແລະ ແຜນວຽກສຳລັບອຸດສາຫະກຳດັ່ງກ່າວ, ແລະນະໂຍບາຍເພື່ອການກະຕຸກຊຸກຍູ້ອຸດສາຫະກຳດັ່ງກ່າວໃຫ້ມີປະສິດທິພາບຂຶ້ນ.

- ***ສົ່ງເສີມແຜນການທີ່ມີນະໂຍບາຍກະຕຸກຊຸກຍູ້ເພື່ອຮັກສາປ່າໄມ້ຢືນຕົ້ນ.*** ເປັນທີ່ຈະແຈ້ງວ່າ ປ່າໄມ້ລາວໄດ້ປະກອບສ່ວນບໍ່ພຽງແຕ່ໃນການສ້າງລາຍໄດ້ຈາກເຄື່ອງປ່າຂອງດົງເທົ່ານັ້ນ ແຕ່ຍັງໃຫ້ການຮັກສາອະນຸລັກຊີວະນານາພັນ, ແລະ ສະໜອງບໍລິການທາງດ້ານລະບົບນິເວດ ແລະ ຄ້ຳຊູຊີວິດການເປັນຢູ່ຂອງປະຊາຊົນອີກດ້ວຍ. ຄູນຄ່າຂອງຕົ້ນໄມ້ຢືນຕົ້ນ (ບໍ່ຖືກຕັດ) ອາດຈະສູງຫລາຍ ແລະ ກໍກຳລັງມີນະໂຍບາຍກະຕຸກຊຸກຍູ້ເພື່ອສົ່ງເສີມການລົງທຶນໃນການປົກປັກຮັກສາປ່າໄມ້ ເພື່ອເສີມຕໍ່ກິດຈະກຳສົ່ງເສີມປ່າໄມ້ແບບຍືນຍົງ. ໃນນັ້ນມີການຄ້າຂາຍກາກບອນທີ່ສະສົມຢູ່ໃນປ່າໄມ້ ດ້ວຍແຜນການຢ່າງເຊັ່ນ REDD (ການຫຼຸດຜ່ອນການປ່ອຍສານກາກບອນຈາກປ່າໄມ້ ແລະ ການເຊື່ອມໂຊມຂອງປ່າໄມ້) ແລະການຮັບການຈ່າຍຄ່າຈາກຜູ້ພັດທະນາ ຫຼື ຈາກແຫຼ່ງອື່ນ ທີ່ໄດ້ຮັບຜົນປະໂຫຍດຈາກບໍລິການການດູແລຮັກສາສະພາບນິເວດຂອງປ່າໄມ້, ຢ່າງເຊັ່ນ ນ້ຳສະອາດ ແລະ ການຄຸ້ມຄອງການເຊາະເຈື່ອນ (ການຈ່າຍຄ່າເພື່ອການບໍລິການຂອງລະບົບນິເວດ ຫຼື PES). ແມ້ວ່າແຜນການດັ່ງກ່າວຍັງຢູ່ໃນຂັ້ນ ເລີ່ມຕົ້ນຢູ່ ສປປ ລາວ, ແຕ່ກໍ່ຍັງມີຕົວຢ່າງເຊັ່ນລະບົບການທົດແທນທີ່ໄດ້ນຳໃຊ້ຢູ່ເຂື່ອນນ້ຳເທີນ 2.

- ***ການບັງຄັບໃຊ້ກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ມີຄວາມຄວາມຈຳເປັນເພື່ອຄວາມຍືນຍົງ.*** ການສ້າງຕັ້ງກົມກວດກາປ່າໄມ້ (DOFI), ໄປພ້ອມກັບຄວາມເອົາໃຈໃສ່ຂອງລັດຖະບານລາວຕໍ່ການສ້າງຄວາມເຂັ້ມແຂງ ແລະ ການເຂົ້າຮ່ວມໃນແຜນງານຂອງພູມີພາກຢ່າງເຊັ່ນໃນເຄືອຂ່າຍປະຕິບັດການຕິດຕາມການຄ້າຂາຍສັດປ່າ ຂອງ ອາຊຽນ (ASEAN-WEN) ເປັນບາດກ້າວທີ່ສຳຄັນຫຼາຍ. ນອກເໜືອຈາກນີ້ ກໍ່ມີການພະຍາຍາມນຳກົດໝາຍມາໃຊ້ກັບຂະແໜງປ່າໄມ້ຢ່າງທົ່ວເຖິງ, ເຊິ່ງຈະຊ່ວຍໃນການປັບປຸງສະພາບການໃນໄລຍະຍາວ. ພ້ອມກັນນີ້ກໍ່ຍັງມີວິທີທາງອື່ນທີ່ຜູ້ຕັດສິນບັນຫາສາມາດນຳມາພິຈາລະນາເພື່ອຍົກສູງຄວາມພະຍາຍາມໃນການບັງຄັບໃຊ້ລະບຽບກົດໝາຍ. ໃນນັ້ນ ລວມມີການໃຊ້ຊຸມຊົນທ້ອງຖິ່ນເຂົ້າມາມີສ່ວນຮ່ວມໃນການຕິດຕາມກວດກາກັນ ບົນພື້ນຖານການແບ່ງຜົນປະໂຫຍດໃຫ້ມັນສົມດູນຂຶ້ນກວ່າເກົ່າເປັນສິ່ງກະຕຸກຊຸກຍູ້. ການຕິດຕາມໂດຍບຸກຄົນທີ່ສາມກໍ່ເປັນອີກວິທີໜຶ່ງທີ່ນຳໃຊ້ມາແລ້ວໃນຫຼາຍປະເທດເຊັ່ນກຳປູເຈຍ. ການຈັດການບັນຫາສໍ້ລາດບັງຫຼວງກໍ່ເປັນສິ່ງສຳຄັນ.



*ພາບໂດຍ: Charlotte Hicks*

*PEI ແມ່ນຫຍັງ?*

ອົງການສະຫະປະຊາຊາດເພື່ອການສົ່ງອອກ (UNDP) ແລະ ໂຄງການສະຫະປະຊາຊາດດ້ານສິ່ງແວດລ້ອມ (UNEP) ສະໜັບສະໜູນໂຄງການເຊື່ອມໂຍງສິ່ງແວດລ້ອມ
ເຂົ້າໃນກິດຈະກຳຫຼຸດຜ່ອຄວາມທຸກຍາກ (PEI), ເຊິ່ງເປັນໂຄງການທີ່ແນໃສ່ການນຳເອົາປະເດັນ ຄວາມທຸກຍາກ ແລະ ສິ່ງແວດລ້ອມ ໃຫ້ເຂົ້າໃນແຜນພັດທະນາລະດັບຊາດ. ຈຸດປະສົງຂອງໂຄງການ PEI ໃນ ສປປ ລາວແມ່ນຮັບຮອງການພັດທະນາເສດຖະກິດລາວໂດຍມີການພັດທະນາແບບປະຊາ ຊົນມີສ່ວນຮ່ວມແບບຍືນຍົງ. ໂຄງການ PEI ກໍ່ແນໃສ່ການສ້າງຄວາມເຂັ້ມແຂງໃຫ້ສະຖາບັນໃນການສ້າງແຜນພັດທະນາແຫ່ງຊາດ ແລະ ການຄຸ້ມຄອງການລົງທຶນຂອງເອກະຊົນ, ການສ້າງຄູ່ມືເພື່ອປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ ແລະ ການສ້າງການຄົ້ນຄວ້າວິໃຈແບບມີຫຼັກຖານທາງດ້ານສັງຄົມ ແລະ ສິ່ງແວດລ້ອມຂອງການນຳໃຊ້ທີ່ດິນ. ໂຄງການນີ້ແມ່ນຮ່ວມມື ປະສານງານກັບກະຊວງແຜນການ ແລະ ການລົງທຶນ, ໂດຍມີກົມແຜນການ, ກົມສົ່ງເສີມການລົງທຶນ, ສະຖາບັນການຄົ້ນຄວ້າເສດຖະກິດແຫ່ງຊາດ ແລະ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມບໍລິຫານໂຄງການບາງສ່ວນ.

www.unpei.org/programmes/country_profiles/lao-pdr.asp

**ຂໍ້ມູນເພີ່ມຕເຕີມຂອງໂຄງການ PEI ໃນ ສປປ ລາວ:**

pei.lao@undp.org

ບົດລາຍງານຫຍໍ້ ແມ່ນກະກຽມໂດຍອົງການ IUCN ສປປ ລາວ, ໂດຍໄດ້ປຶກສາຫາລືດ້ວຍທີ່ປຶກສາຈາກອົງການ SUFORD, ພາຍໃຕ້ການແນະນຳຈາກໂຄງການເຊື່ອມໂຍງສິ່ງແວດລ້ອມ ເຂົ້າໃນກິດຈະກຳຫຼຸດຜ່ອນຄວາມທຸກຍາກ.

**IUCN, ອົງການສາກົນເພື່ອການອະນຸລັກທຳມະຊາດ**, ຊ່ວຍເຫຼືອໂລກດ້ວຍການຊອກຫາວິທີການແກ້ໄຂໃນທາງປະຕິບັດຕໍ່ສິ່ງທ້າທາຍທີ່ດ່ວນທີ່ສຸດທາງດ້ານສິ່ງແວດລ້ອມ ແລະ ການພັດທະນາ, ດ້ວຍການສະໜັບສະໜູນການຄົ້ນຄວ້າວິທະຍາສາດ, ການຄຸ້ມຄອງໂຄງການພາກສະໜາມທົ່ວໂລກ, NGOs, ສົນທິສັນຍາສາກົນຂອງສະຫະປະຊາຊາດ ແລະ ບໍລິສັດເພື່ອສ້າງນະໂຍບາຍ, ກົດໝາຍ ແລະ ການຈັດຕັ້ງປະຕິບັດທີ່ດີທີ່ສຸດ.

ເຄືອຂ່າຍທີ່ເກົ່າແກ່ ແລະ ທີ່ໃຫຍ່ທີ່ສຸດໃນໂລກດ້ານສິ່ງແວດລ້ອມ IUCN ເປັນອົງການປະຊາທິປະໄຕທີ່ມີສະມາຊິກ ລັດຖະບານ ແລະ ສະມາຊິກອົງການ NGO ຫຼາຍກວ່າ 1,000 ສະມາຊິກ ແລະກໍ່ມີອາສາສະໝັກວິທະຍາສາດ ແລະ ຊ່ຽວຊານໃນ 160 ປະເທດ ເກືອບ 11,000 ຄົນ. ວຽກງານຂອງ IUCN ແມ່ນມີພະນັກງານຫຼາຍກວ່າ 1,000 ຄົນ ແບ່ງອອກໃນຫ້ອງການ 60 ບ່ອນ ແລະ ມີຄູ່ຮ່ວມມືຫຼາຍ 100 ກວ່າອົງການລັດ ແລະ ເອກະຊົນໃນທົ່ວໂລກ. ສູນກາງຂອງ IUCN ແມ່ນຕັ້ງຢູ່ເມືອງ ກລັອງ, ປະເທດສວິດເຊີແລນ.

www.iucn.org



*ພາບໂດຍ: IUCN Lao PDR*

ການປະກອບຄຳຄິດຄຳເຫັນ ທີ່ບັນລະຍາຍຢູ່ໃນສິ່ງພິມນີ້ ແມ່ນເປັນຂອງຜູ້ຂຽນ ຊຶ່ງບໍ່ກ່ຽວຂ້ອງກັບກະຊວງແຜນການ ແລະ ການລົງທຶນ ຢູ່ ສປປ ລາວ